# ຫຼັກສູດ

# ຊັ້ນອະນຸບານສຶກສາ

ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2012

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ

8400---
ເລກທີ............ /ສສກ.ສວສ /2012

ນະຄອນຫຼວງວຽງຈັນ, ວັນທີ.....05 SEP 2012

# ຂໍ້ຕົກລົງຂອງລັດຖະມົນຕີ

ວ່າດ້ວຍການຮັບຮອງ ແລະ ນຳໃຊ້ປຶ້ມຫຼັກສູດຊັ້ນອະນຸບານສຶກສາ

ເຫັນຕາມ: ລຳດັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011.

ເຫັນຕາມ: ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ສະບັບເລກທີ 1124/ ສກ.ຈຕ, ລົງວັນທີ 20 ເມສາ 2012.

ເຫັນຕາມ: ການສະເໜີຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ລັດຖະມົນຕີວ່າກະຊວງສຶກສາທິການ ແລະ ກິລາ ຈຶ່ງຕົກລົງ

ມາດຕາ 1: ຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດຊັ້ນອະນຸບານສຶກສາ ສະບັບປັບປຸງໃນໂຮງຮຽນອະນຸບານ ທົ່ວປະເທດ ນັບແຕ່ສົກຮຽນ 2012-2013 ເປັນຕົ້ນໄປ.

ມາດຕາ 2: ໃຫ້ກົມອະນຸບານ ແລະ ປະຖົມສຶກສາ, ກົມສ້າງຄູ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວໃຫ້ໄດ້ຮັບຜົນດີ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ດຣ.ພັນຄຳ ວິພາວັນ

# ຄຳນຳ

ຫຼັກສູດອະນຸບານ ແມ່ນເອກະສານທີ່ສຳຄັນເພື່ອເປັນບ່ອນອີງໃຫ້ຄູສອນອະນຸບານໃນການຈັດການຮຽນ-ການສອນ, ທັງເປັນຄູ່ມືໃຫ້ແກ່ຜູ້ບໍລິຫານການສຶກສາລະດັບຕ່າງໆໃຊ້ໃນການຕິດຕາມການປະຕິບັດຫຼັກສູດ ແລະ ການຈັດການຮຽນການສອນໃນໂຮງຮຽນອະນຸບານທົ່ວປະເທດ. ຫຼັກສູດອະນຸບານໄດ້ຖືກປັບປຸງ, ດັດແປງ ແລະ ຮຽບຮຽງຂຶ້ນ ເພື່ອກຽມຄວາມພ້ອມຢ່າງຮອບດ້ານໃຫ້ແກ່ເດັກ ອາຍຸ 3 ຫາ 6 ປີທີ່ຈະເຂົ້າຮຽນໃນຂັ້ນປະຖົມປີທີ 1 ຢ່າງມີຄຸນນະພາບ.

ຫຼັກສູດອະນຸບານສະບັບນີ້ ໄດ້ປະກາດນຳໃຊ້ຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ເລກທີ 3400 /ສສກ.ສວສ/2012, ນະຄອນຫຼວງວຽງຈັນ, ວັນທີ 05 ກັນຍາ (09) ປີ 2012.

ຫຼັກສູດອະນຸບານໄດ້ແບ່ງອອກເປັນ 2 ພາກໃຫຍ່ຄື:

**ພາກທີ I. ສະພາບລວມຂອງຫຼັກສູດອະນຸບານ**

1. ຈຸດໝາຍຫຼັກສູດຊັ້ນອະນຸບານສຶກສາ.
2. ຫຼັກສູດຊັ້ນອະນຸບານສຶກສາ
3. ຫຼັກການຈັດປະສົບການ.
4. ການຈັດກິດຈະກຳການຮຽນການສອນ.
5. ການຕິດຕາມພັດທະນາການຂອງເດັກອະນຸບານ.
6. ການກຳນົດປຶ້ມເສີມປະສົບການສຳລັບເດັກອະນຸບານ.
7. ການກຳນົດເຄື່ອງຫຼິ້ນສຳລັບເດັກອະນຸບານ.
8. ການນຳໃຊ້ຫຼັກສູດຊັ້ນອະນຸບານສຶກສາ.
9. ການເລື່ອນຊັ້ນການສຶກສາລະຫວ່າງຂັ້ນອະນຸບານ 3 ຫາ ຂັ້ນປະຖົມສຶກສາປີທີ 1.

**ພາກທີ II . ສະມັດຖະພາບດ້ານການກຽມຄວາມພ້ອມຂອງເດັກອາຍຸ 3-6 ປີ**

1. ພັດທະນາການທາງດ້ານຮ່າງກາຍ, ການອະນາໄມ ແລະ ຄວາມປອດໄພ.
2. ພັດທະນາການທາງດ້ານອາລົມ, ຈິດໃຈ.
3. ພັດທະນາການທາງດ້ານສັງຄົມ.
4. ພັດທະນາການທາງດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ.
5. ພັດທະນາການທາງດ້ານພາສາ.

ໝາຍເຫດ: ສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານພາສາອັງກິດໄດ້ກຳນົດໃຫ້ໃຊ້ໃນໂຮງຮຽນທີ່ສອນພາສາອັງກິດໃຫ້ນັກຮຽນອະນຸບານເທົ່ານັ້ນ.

ຫຼັກສູດອະນຸບານສະບັບນີ້ໄດ້ນຳສະເໜີຫຼັກການ, ເນື້ອໃນ, ວິທີການ, ບົດບາດ ແລະ ໜ້າທີ່ຂອງຜູ້ທີ່ມີສ່ວນກ່ຽວຂ້ອງໃນການປະຕິບັດຫຼັກສູດ, ເພື່ອໃຫ້ຄູສອນໄດ້ສຶກສາຄົ້ນຄວ້າ ແລະ ນຳໃຊ້ເຂົ້າໃນການຈັດການຮຽນການສອນໃຫ້ມີຄວາມສອດຄ່ອງກັບສະພາບຕົວຈິງຂອງທ້ອງຖິ່ນ ແລະ ໃຫ້ການປະຕິບັດຕົວຈິງມີປະສິດທິພາບ.

ຫຼັກສູດອະນຸບານສະບັບນີ້ອາດມີຄວາມຂາດຕົກບົກຜ່ອງຢູ່ຫຼາຍປະການ ດັ່ງນັ້ນ, ໃນເວລານຳໃຊ້ຕົວຈິງຫາກຄູ ຫຼື ຜູ້ທີ່ມີສ່ວນກ່ຽວຂ້ອງເຫັນສິ່ງທີ່ຄວນປັບປຸງ ຂໍຄວາມກະລຸນາຊ່ວຍປະກອບຄຳຄິດເຫັນມາຍັງຄະນະຄົ້ນຄວ້າ ແລະ ປັບປຸງຫຼັກສູດອະນຸບານ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ກະຊວງສຶກສາທິການ ແລະ ກິລາ ເພື່ອຈະໄດ້ນຳເອົາຄຳຄິດເຫັນຂອງທ່ານໄປປັບປຸງຫຼັກສູດໃຫ້ມີຄວາມສົມບູນຂຶ້ນເລື້ອຍໆ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ


| | | ໜ້າ |
|---|---|---|
| **ພາກທີ I.** | **ສະພາບລວມຂອງຫຼັກສູດອະນຸບານສຶກສາ** | 1 |
| I. | ຈຸດໝາຍການສຶກສາເດັກຊັ້ນອະນຸບານສຶກສາ | |
| I I. | ຫຼັກສູດຊັ້ນອະນຸບານສຶກສາ | |
| | 1. ຄວາມໝາຍ ແລະ ຄວາມສຳຄັນ | 1 |
| | 2. ຫຼັກການຂອງຫຼັກສູດຊັ້ນອະນຸບານສຶກສາ | 2 |
| | 3. ຈຸດປະສົງຂອງຫຼັກສູດຊັ້ນອະນຸບານສຶກສາ | |
| | 4. ເນື້ອໃນ ແລະ ປະສົບການທີ່ຄວນສົ່ງເສີມ | 3 |
| | 5. ເວລາຮຽນ ແລະ ວັນພັກ | 5 |
| | 6. ການປະຕິບັດເວລາໃນກິດຈະກຳປະຈຳວັນ | 9 |
| III. | ຫຼັກການຈັດປະສົບການ | 10 |
| IV. | ການຈັດກິດຈະກຳການຮຽນ-ການສອນ | 11 |
| | 1. ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ | 11 |
| | 2. ກິດຈະກຳໃນວົງມົນ | 12 |
| | 3. ກິດຈະກຳສິລະປະສ້າງສັນ | 12 |
| | 4. ກິດຈະກຳຫຼິ້ນຕາມມູມ | 12 |
| | 5. ກິດຈະກຳຫຼິ້ນກາງແຈ້ງ | 12 |
| | 6. ກິດຈະກຳເກມການສຶກສາ | 12 |
| V. | ການຕິດຕາມພັດທະນາການເດັກອະນຸບານ | 13 |
| VI. | ການກຳນົດປຶ້ມແບບເຝິກຫັດ ຫຼື ປຶ້ມເສີມປະສົບການສຳລັບເດັກອະນຸບານ | 13 |
| | 1. ຄຸນລັກສະນະຂອງປຶ້ມແບບເຝິກຫັດ ຫຼື ປຶ້ມເສີມປະສົບການສຳລັບເດັກອະນຸບານ | 14 |
| | 2. ການເລືອກປຶ້ມແບບເຝິກຫັດ ຫຼື ເສີມປະສົບປະການສຳລັບເດັກອະນຸບານ | 14 |

**VII.** ການກຳນົດເຄື່ອງຫຼິ້ນສຳລັບເດັກອະນຸບານ 15
1. ເຄື່ອງຫຼິ້ນຕາມມຸມ
2. ເຄື່ອງຫຼິ້ນຕາມເດີ່ນ ຫຼື ຫຼິ້ນກາງແຈ້ງ
**VIII.** ການນຳໃຊ້ຫຼັກສູດຊັ້ນອະນຸບານສຶກສາ 16
1. ການນຳໃຊ້ຫຼັກສູດສຳລັບຄູ
2. ການມີສ່ວນຮ່ວມຂອງຜູ້ປົກຄອງເດັກໃນການນຳໃຊ້ຫຼັກສູດ
3. ການຕິດຕາມ,ປະເມີນຜົນການນຳໃຊ້ຫຼັກສູດ
4. ການລາຍງານຜົນການປະຕິບັດຫຼັກສູດ
**IX.** ການເລື່ອນຊັ້ນການສຶກສາລະຫວ່າງຊັ້ນອະນຸບານສຶກສາປີທີ 3 ຫາຊັ້ນປະຖົມສຶກສາປີທີ 1 18
1. ຄວາມໝາຍຄວາມສຳຄັນການເລື່ອນຊັ້ນຮຽນ
2. ບົດບາດ ແລະ ໜ້າທີ່ຂອງພາກສ່ວນທີ່ກ່ຽວຂ້ອງໃນການເລື່ອນຊັ້ນຮຽນ 19
**ພາກທີ II. ສະມັດຖະພາບດ້ານການກຽມຄວາມພ້ອມເດັກອາຍຸ 3-6 ປີ 22**
I. ພັດທະນາການທາງດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ 22
II. ພັດທະນາການທາງດ້ານອາລົມ-ຈິດໃຈ 25
III. ພັດທະນາການທາງດ້ານສັງຄົມ 28
IV. ພັດທະນາການທາງດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ 30
V. ພັດທະນາການທາງດ້ານພາສາ 37
- ສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານພາສາອັງກິດ 40
- ອະທິບາຍສັບ 42

# ພາກທີ I ສະພາບລວມຂອງຫຼັກສູດຊັ້ນອະນຸບານສຶກສາ

## I. ຈຸດໝາຍການສຶກສາເດັກຊັ້ນອະນຸບານສຶກສາ

ການສຶກສາຊັ້ນອະນຸບານສຶກສາເປັນການພັດທະນາເດັກອາຍຸ 3 ຫາ 6 ປີຕາມ 5 ຫຼັກມູນການສຶກສາຄື : ຄຸນສົມບັດສຶກສາ, ປັນຍາສຶກສາ, ສິລະປະສຶກສາ, ພະລະສຶກສາ, ແຮງງານສຶກສາ ໂດຍຈັດການສຶກສາອົບຮົມ, ລ້ຽງດູ, ສົ່ງເສີມຂະບວນການຮຽນຮູ້ທີ່ຕອບສະໜອງຕໍ່ທຳມະຊາດ ແລະ ພັດທະນາການຂອງເດັກແຕ່ລະຄົນພາຍໃຕ້ສັງຄົມ-ວັດທະນະທຳທີ່ເດັກອາໄສຢູ່ດ້ວຍຄວາມຮັກແພງ, ຄວາມເຂົ້າໃຈຂອງທຸກຄົນເພື່ອສ້າງພື້ນຖານຄຸນນະພາບຊີວິດໃຫ້ເດັກພັດທະນາໄປສູ່ຄວາມເປັນພົນລະເມືອງລາວເຊິ່ງປະກອບດ້ວຍຄວາມຮູ້, ຄວາມສາມາດທາງດ້ານວິທະຍາສາດ ແລະ ຄຸນສົມບັດສິນທຳປະຕິວັດ, ດຳລົງຊີວິດຢູ່ໃນຄອບຄົວ ແລະ ສັງຄົມພາຍໃຕ້ຮີດຄອງປະເພນີອັນດີງາມຂອງຊາດລາວ.

## II. ຫຼັກສູດຊັ້ນອະນຸບານສຶກສາ

### 1. ຄວາມໝາຍ ແລະ ຄວາມສຳຄັນ

ການສຶກສາຊັ້ນອະນຸບານສຶກສາໝາຍເຖິງການລ້ຽງດູ, ການຮຽນ ແລະ ການສອນເດັກຢູ່ໂຮງຮຽນອະນຸບານເຊິ່ງຮັບເດັກແຕ່ອາຍຸ 3 ຫາ 6 ປີ. ການພັດທະນາເດັກຊັ້ນອະນຸບານສຶກສາແມ່ນບາດກ້າວເບື້ອງຕົ້ນທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດໃຫ້ມີການຂະຫຍາຍຕົວທາງດ້ານຮ່າງກາຍ, ອະນາໄມ, ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ, ດ້ານອາລົມ-ຈິດໃຈ ແລະ ດ້ານສັງຄົມ ເຊິ່ງເປັນພື້ນຖານສຳລັບການຮຽນຢູ່ໃນຊັ້ນປະຖົມສຶກສາ ແລະ ໃນຂັ້ນຕໍ່ໄປ.

ການສຶກສາຊັ້ນອະນຸບານແບ່ງອອກເປັນ 3 ຂັ້ນຮຽນຄື :

- ອະນຸບານ 1 ຮັບເດັກອາຍຸ 3-4 ປີ.
- ອະນຸບານ 2 ຮັບເດັກອາຍຸ 4-5 ປີ.
- ອະນຸບານ 3 ຮັບເດັກອາຍຸ 5-6 ປີ.

## 2. ຫຼັກການຂອງຫຼັກສູດຊັ້ນອະນຸບານສຶກສາ

ຫຼັກສູດຊັ້ນອະນຸບານສຶກສາແມ່ນອີງໃສ່ຫຼັກການພັດທະນາເດັກແບບຮອບດ້ານໃນການກຽມຄວາມພ້ອມທາງດ້ານຮ່າງກາຍ, ອະນາໄມແລະ ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ, ດ້ານອາລົມ-ຈິດໃຈ ແລະ ດ້ານສັງຄົມເພື່ອໃຫ້ເດັກມີຄວາມຮູ້ພື້ນຖານທີ່ຈະໄປຮຽນຕໍ່ໃນຊັ້ນປະຖົມສຶກສາປີທີ 1 ຢ່າງມີຄຸນນະພາບ.

ຫຼັກການຂອງຫຼັກສູດຊັ້ນອະນຸບານສຶກສາປະກອບດ້ວຍ 6 ຫຼັກການດັ່ງລຸ່ມນີ້:

2.1 ສົ່ງເສີມຂະບວນການກຽມຄວາມພ້ອມໃນການຮຽນຮູ້ ແລະ ພັດທະນາການຂອງເດັກອາຍຸ 3 ຫາ 6 ປີ.

2.2 ເບິ່ງແຍງ, ລ້ຽງດູເດັກໃຫ້ເຕີບໃຫຍ່ຕາມໄວອາຍຸ ແລະ ສຶກສາອົບຮົມໃນການຮຽນໂດຍຄຳນຶງເຖິງພັດທະນາການຂອງເດັກແຕ່ລະຄົນ, ແບບແຜນດຳລົງຊີວິດໃນສັງຄົມ, ວັດທະນາທຳຂອງຊາດ ແລະ ທ້ອງຖິ່ນ.

2.3 ພັດທະນາການຮຽນຮູ້ເດັກໂດຍຜ່ານການຫຼິ້ນ ແລະ ປະຕິບັດກິດຈະກຳດ້ວຍຫຼາຍຮູບແບບທີ່ເໝາະສົມກັບໄວອາຍຸ, ເພດ, ເຜົ່າ ແລະ ຕາມສະພາບຕົວຈິງໃນແຕ່ລະທ້ອງຖິ່ນ.

2.4 ຈັດປະສົບການໃຫ້ເດັກໄດ້ຮຽນຮູ້ ແລະ ນຳໃຊ້ເຂົ້າໃນຊີວິດປະຈຳວັນໄດ້ຢ່າງມີຄວາມສຸກ ແລະ ມີຄຸນນະພາບ.

2.5 ຈັດການຮຽນການສອນແບບບູລະນາການດ້ວຍກິດຈະກຳການຫຼິ້ນ ແລະ ຮຽນ ເຊິ່ງປະກອບມີກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ, ກິດຈະກຳໃນວົງມົນ, ກິດຈະກຳສິລະປະສ້າງສັນ, ການເຄື່ອນໄຫວຫຼິ້ນຕາມມຸມ, ກິດຈະກຳການຫຼິ້ນກາງແຈ້ງ ແລະ ກິດຈະກຳເກມການສຶກສາ.

2.6 ພັດທະນາເດັກແບບຮອບດ້ານເພື່ອເຊື່ອມຕໍ່ການຮຽນລະຫວ່າງຊັ້ນອະນຸບານສຶກສາ ແລະ ຊັ້ນປະຖົມ ສຶກສາປີທີ 1 ໂດຍມີການຮ່ວມມື ແລະ ປະສານງານລະຫວ່າງໂຮງຮຽນ, ຄອບຄົວ ແລະ ຊຸມຊົນ.

## 3. ຈຸດປະສົງຂອງຫຼັກສູດຊັ້ນອະນຸບານສຶກສາ

### 3.1 ຈຸດປະສົງລວມ

ຫຼັກສູດຊັ້ນອະນຸບານສຶກສາແນໃສ່ສ້າງພື້ນຖານພັດທະນາຄຸນນະພາບເດັກແບບຮອບດ້ານໂດຍສະເພາະແມ່ນການກຽມຄວາມພ້ອມໃນການຮຽນຮູ້, ທັກສະ ແລະ ຄຸນສົມບັດໃຫ້ເດັກອາຍຸ 3 ຫາ 6 ປີ ທັງພາກລັດ ແລະ ເອກະຊົນ.

3.2 ຈຸດປະສົງສະເພາະ

ຈຸດປະສົງສະເພາະໃນການສົ່ງເສີມພັດທະນາການເດັກອະນຸບານແມ່ນສ້າງໃຫ້ເດັກ 3 - 6 ປີ ມີການພັດທະນາຮອບດ້ານດັ່ງນີ້:

1) ມີສຸກຂະພາບດີ, ມີຮ່າງກາຍຈະເລີນເຕີບໃຫຍ່ຕາມໄວອາຍຸ, ມີນິດໄສຮັກການອະນາໄມ, ປ້ອງກັນຄວາມປອດໄພໃນການຫຼິ້ນ ແລະ ຮຽນ.
2) ນຳໃຊ້ກ້າມຊີ້ນໃຫຍ່, ກ້າມຊີ້ນນ້ອຍໃນການເຄື່ອນໄຫວໃຫ້ມີຄວາມຄ່ອງແຄ້ວ ແລະ ປະສານສຳພັນກັນ.
3) ຊ່ວຍເຫຼືອຕົນເອງໄດ້ເໝາະສົມກັບໄວອາຍຸ.
4) ມີອາລົມ-ຈິດໃຈທີ່ດີ, ມີຄວາມສຸກໃນການຫຼິ້ນ ແລະ ຮຽນ.
5) ມີມາລະຍາດ, ມີລະບຽບວິໄນ ແລະ ຄວາມຮັບຜິດຊອບ, ມີຄວາມສັດຊື່ ແລະ ຈິດໃຈດີງາມ.
6) ມີຄວາມສົນໃຈ, ພໍໃຈ, ມ່ວນຊື່ນ, ກ້າສະແດງອອກທາງດ້ານສິລະປະກຳ, ສິລະປະດົນຕີ, ການຫຼິ້ນ ແລະ ການອອກກຳລັງກາຍ.
7) ຮັກທຳມະຊາດ, ສິ່ງແວດລ້ອມ, ວັດທະນາທຳອັນດີງາມຂອງຊາດ ແລະ ທ້ອງຖິ່ນ.
8) ປະຕິບັດຕົນເປັນສະມາຊິກທີ່ດີຂອງໂຮງຮຽນ, ຄອບຄົວ ແລະ ສັງຄົມ ແລະ ຢູ່ຮ່ວມກັບຜູ້ອື່ນໄດ້ຢ່າງມີຄວາມສຸກ.
9) ມີຄວາມສາມາດໃນການຄິດ ແລະ ການແກ້ໄຂບັນຫາໄດ້ເໝາະກັບໄວອາຍຸ.
10) ມີເຈດຕະນາທີ່ດີຕໍ່ການຮຽນຮູ້ ແລະ ມີທັກສະໃນການສະແຫວງຫາຄວາມຮູ້ທົ່ວໄປໄດ້ເໝາະສົມກັບໄວອາຍຸ.
11) ຟັງ, ເບິ່ງ, ເວົ້າສື່ສານໃນຊີວິດປະຈຳວັນໄດ້ເໝາະສົມກັບໄວອາຍຸ.
12) ອ່ານປຶ້ມ ແລະ ສ້າງຄວາມຮູ້, ທັກສະ, ນິດໄສຮັກການອ່ານໄດ້ເໝາະສົມກັບໄວອາຍຸ.
13) ຂຽນຕົວອັກສອນລາວ ແລະ ສ້າງຄວາມຮູ້, ທັກສະ, ນິດໄສຮັກການຂຽນໄດ້ເໝາະສົມກັບໄວອາຍຸ.

## 4. ເນື້ອໃນ ແລະ ປະສົບການທີ່ຄວນສົ່ງເສີມ

ເນື້ອໃນ ແລະ ປະສົບການທີ່ຄວນສົ່ງເສີມໃນຫຼັກສູດຊັ້ນອະນຸບານສຶກສາມີດັ່ງນີ້:

4.1 ເນື້ອໃນ

ເນື້ອໃນທີ່ນຳມາຮຽນໃນຫຼັກສູດສະບັບນີ້ປະກອບດ້ວຍ 5 ເນື້ອໃນໃຫຍ່ເຊັ່ນ:

1) ເລື່ອງກ່ຽວກັບຕົວເດັກ: ປະກອບມີຫົວຂໍ້ກ່ຽວກັບເລື່ອງໂຮງຮຽນ, ຕົນຕົວ, ຄອບຄົວ, ມາລະຍາດ, ຄວາມປອດໄພ ແລະ ສຸຂະພາບ.
2) ເລື່ອງກ່ຽວກັບບຸກຄົນ, ອາຊີບ ແລະ ທ້ອງຖິ່ນ: ປະກອບມີຫົວຂໍ້ກ່ຽວກັບເລື່ອງ ບຸກຄົນໃນຄອບຄົວ, ທີ່ຢູ່ອາໄສ, ບຸກຄົນສຳຄັນຂອງຊາດ, ບຸກຄົນສຳຄັນຂອງທ້ອງຖິ່ນ ແລະ ອາຊີບຂອງຄົນໃນທ້ອງຖິ່ນ.

3) ເລື່ອງກ່ຽວກັບສະຖານທີ່ ແລະ ວັດທະນະທຳ: ປະກອບມີຫົວຂໍ້ກ່ຽວກັບເລື່ອງບ້ານ, ເມືອງ, ແຂວງ, ສະຖານທີ່ສຳຄັນຂອງຊາດ, ສະຖານທີ່ທ່ອງທ່ຽວ, ວັດທະນະທຳທ້ອງຖິ່ນ, ວັດທະນະທຳລາວ, ວັນບຸນປະເພນີ, ວັນບຸນສຳຄັນຂອງຊາດ ແລະ ພູມປະເທດລາວ.

4) ເລື່ອງກ່ຽວກັບທຳມະຊາດ ແລະ ສິ່ງແວດລ້ອມ: ປະກອບມີຫົວຂໍ້ກ່ຽວກັບເລື່ອງນ້ຳ, ອາກາດຢູ່ອ້ອມຮອບຕົວ,ຊັບພະຍາກອນທຳມະຊາດ (ດິນ, ຫີນ, ຊາຍ), ລະດູການ (ລະດູແລ້ງ, ລະດູຝົນ), ກາງເວັນ-ກາງຄືນ, ວັນເວລາ (ມື້ນີ້, ມື້ວານ, ມື້ອື່ນ) , ສັດ (ແມງໄມ້, ສັດປີກ, ສັດນ້ຳ), ພືດ (ຕົ້ນໄມ້,  ໝາກໄມ້, ດອກໄມ້, ເຂົ້າ, ຜັກ).

5) ເລື່ອງກ່ຽວກັບສິ່ງຕ່າງໆ ຮອບຕົວເດັກ: ປະກອບມີຫົວຂໍ້ກ່ຽວກັບເລື່ອງອາຫານມີປະໂຫຍດ , ນ້ຳດື່ມສະອາດ,  ການຄົມມະນາຄົມ, ການສື່ສານ,  ປະສາດສຳຜັດທັງ 5 (ເບິ່ງ,ຟັງສຽງ,  ຊີມລົດຊາດ, ດົມກິ່ນ, ຈັບບາຍ), ພະລັງງານ, ຕົວເລກ, ຕົວອັກສອນລາວ, ຮູບຊົງເລຂາຄະນິດ, ເງິນກີບ, ການວັດແທກ,  ສັນຍະລັກ ແລະ ເຄື່ອງໝາຍຕ່າງໆ, ເຄື່ອງນຸ່ງຫົ່ມ, ເຄື່ອງຫຼິ້ນ, ເຄື່ອງມື, ເຄື່ອງໃຊ້.

4.2 ປະສົບການທີ່ຄວນສົ່ງເສີມ

ປະສົບການທີ່ຄວນສົ່ງເສີມແມ່ນສິ່ງທີ່ສຳຄັນ ແລະ ຈຳເປັນໃນການສົ່ງເສີມພັດທະນາການທັງ 5 ດ້ານມີດັ່ງນີ້:

1) ປະສົບການທີ່ສົ່ງເສີມພັດທະນາການທາງດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ.
   - ມີສຸຂະພາບດີ, ຮ່າງກາຍຈະເລີນເຕີບໃຫ່ຍຕາມໄວອາຍຸ, ມີສຸຂະນິດໄສໃນການອະນາໄມ, ມີຄວາມປອດໄພໃນການກິນ, ຫຼິ້ນ ແລະ ຮຽນ.
   - ນຳໃຊ້ກ້າມຊີ້ນໃຫຍ່ ແລະ ກ້າມຊີ້ນນ້ອຍໃນການເຄື່ອນໄຫວໄດ້ຢ່າງຄ່ອງແຄ້ວ ແລະ ປະສານສຳພັນກັນລະຫວ່າງມື ກັບສາຍຕາ.
   - ຊ່ວຍເຫຼືອຕົນເອງໄດ້ເໝາະສົມກັບໄວອາຍຸ.

2) ປະສົບການທີ່ສົ່ງເສີມພັດທະນາການທາງດ້ານພາສາ.
   - ຟັງ, ເບິ່ງ, ເວົ້າສື່ສານໃນຊີວິດປະຈຳວັນໄດ້ເໝາະສົມກັບໄວອາຍຸ.
   - ອ່ານປຶ້ມເພື່ອສ້າງຄວາມຮູ້, ທັກສະໃນການອ່ານ ແລະ ສ້າງນິດໄສຮັກການອ່ານໄດ້ເໝາະສົມກັບໄວອາຍຸ.
   - ຂຽນຕົວອັກສອນລາວເພື່ອສ້າງຄວາມຮູ້, ທັກສະໃນການຂຽນ ແລະ ສ້າງນິດໄສຮັກການຂຽນໄດ້ເໝາະສົມກັບໄວອາຍຸ.

3) ປະສົບການທີ່ສົ່ງເສີມພັດທະນາການທາງດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ.
   - ມີຄວາມສາມາດໃນການຄິດ ແລະ ການແກ້ໄຂບັນຫາໄດ້ເໝາະສົມກັບໄວອາຍຸ.
   - ມີຄວາມສົນໃຈຮຽນຮູ້ສິ່ງຕ່າງໆ ແລະ ສະແຫວງຫາຄວາມຮູ້ທົ່ວໄປໄດ້ເໝາະສົມກັບໄວອາຍຸ.

4) ປະສົບການທີ່ສົ່ງເສີມພັດທະນາການທາງດ້ານອາລົມ-ຈິດໃຈ.

- ມີອາລົມ-ຈິດໃຈທີ່ດີ, ມີຄວາມສຸກໃນການຫຼິ້ນ ແລະ ຮຽນ.
- ມີມາລະຍາດ, ທັດສະນະຄະຕິທີ່ດີ, ຄວາມຮັບຜິດຊອບ ແລະ ມີຈິດໃຈດີງາມ.
- ມີຄວາມສົນໃຈ, ພໍໃຈ, ມ່ວນຊື່ນ, ກ້າສະແດງອອກທາງສິລະປະກຳ, ສິລະປະດົນຕີ, ການຫຼິ້ນ ແລະ ການອອກກຳລັງກາຍ.

5) ປະສົບການທີ່ສົ່ງເສີມພັດທະນາການທາງດ້ານສັງຄົມ.

- ຮັກທຳມະຊາດສິ່ງແວດລ້ອມ, ວັດທະນາທຳອັນດີງາມຂອງຊາດ ແລະ ທ້ອງຖິ່ນ.
- ຢູ່ຮ່ວມກັບຜູ້ອື່ນໄດ້ຢ່າງມີຄວາມສຸກ, ປະຕິບັດຕົນເປັນສະມາຊິກທີ່ດີຂອງໂຮງຮຽນ, ຄອບຄົວ ແລະ ສັງຄົມ.

ເນື້ອໃນທີ່ນຳມາເປັນຫົວຂໍ້ຂອງໜ່ວຍການສອນມີ 8 ໜ່ວຍຄື: 1. ຕົວຂອງຂ້ອຍ, 2. ຄອບຄົວຂອງຂ້ອຍ, 3. ບ້ານຂອງຂ້ອຍ, 4. ໂຮງຮຽນຂອງຂ້ອຍ, 5. ທຳມະຊາດອ້ອມຮອບຕົວເຮົາ, 6. ສິ່ງແວດລ້ອມອ້ອມຮອບຕົວເຮົາ, 7. ການຄົມມະນາຄົມ ແລະ ການສື່ສານ, 8. ສິ່ງຕ່າງໆອ້ອມຮອບຕົວເຮົາ.

## 5. ເວລາຮຽນ ແລະ ວັນພັກ

5.1 ເວລາຮຽນໃນ 1 ປີຮຽນ

ຫຼັກສູດສະບັບນີ້ໄດ້ກຳນົດໄລຍະເວລາຮຽນໃນໜຶ່ງສົກຮຽນ 36 ອາທິດເຊິ່ງມີລາຍລະອຽດດັ່ງນີ້ :

**ພາກຮຽນ ທີ 1 ມີ 20 ອາທິດ:**

- ເວລາຮຽນ 17 ອາທິດ.
- ປະເມີນພັດທະນາການຂອງເດັກ 1 ອາທິດ (ອາທິດທີ 2 ຂອງ ເດືອນ ມັງກອນ).
- ພັກພາກຮຽນ ທີ 1: 2 ອາທິດ (ທ້າຍເດືອນມັງກອນ).

**ພາກຮຽນ ທີ 2 ມີ 16 ອາທິດ:**

- ເວລາຮຽນ 15 ອາທິດ.
- ປະເມີນພັດທະນາການຂອງເດັກ 1 ອາທິດ (ອາທິດທີ 4 ຂອງ ເດືອນ ພຶດສະພາ).

5.2 ວັນພັກຮຽນ

- ພັກບຸນສຳຄັນຂອງຊາດ: ປີໃໝ່ສາກົນ (ຕົ້ນເດືອນມັງກອນ), ວັນແມ່ຍິງສາກົນ (ຕົ້ນເດືອນມີນາ), ປີໃໝ່ລາວ (ກາງເດືອນເມສາ), ວັນກຳມະກອນ (ຕົ້ນເດືອນພຶດສະພາ), ວັນເດັກສາກົນ (ຕົ້ນເດືອນມິຖຸນາ), ວັນຄູ (ຕົ້ນເດືອນຕຸລາ), ບຸນວັນຊາດ (ຕົ້ນເດືອນທັນວາ),
- ພັກປະຈຳພາກຮຽນທີ1: 2 ອາທິດ (ທ້າຍເດືອນມັງກອນ).
- ພັກປະຈຳປີຮຽນ ຫຼື ພາກທີ 2: 12 ອາທິດ (ອາທິດທີ 3 ກາງເດືອນມິຖຸນາ ຫາ ທ້າຍເດືອນສິງຫາ).

5.3 ວັນຮຽນໃນ 1 ອາທິດ: 5 ວັນ (ວັນຈັນ ເຖິງ ວັນສຸກ)

5.4 ກິດຈະກຳການຮຽນໃນແຕ່ລະວັນ ມີ 6 ກິດຈະກຳ ຄື:

- ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ.
- ກິດຈະກຳສິລະປະສ້າງສັນ.
- ກິດຈະກຳໃນວົງມົນ.
- ກິດຈະກຳເກມການສຶກສາ.
- ກິດຈະກຳຫຼິ້ນຕາມມຸມ.
- ກິດຈະກຳຫຼິ້ນກາງແຈ້ງ.

5.5 ຕາຕະລາງເວລາຮຽນ, ຫຼິ້ນ ແລະ ເຄື່ອນໄຫວກິດຈະກຳປະຈຳວັນ

| ລ/ດ | ລາຍການ | ອະນຸບານ 1 | ອະນຸບານ 2 | ອະນຸບານ 3 |
|---|---|---|---|---|
| | | ເວລາ/ ນາທີ | ເວລາ/ ນາທີ | ເວລາ/ ນາທີ |
| 1 | ຮັບເດັກ, ທັດກາຍ ແລະ ເຄົາລົບທຸງ | 20-25 | 20-25 | 20-25 |
| 2 | ຮຽນແຕ່ລະກິດຈະກຳ ລວມມີ 4 ກິດຈະກຳ : ກິດຈະກຳໃນວົງມົນ, ສິລະປະສ້າງສັນ, ເກມການສຶກສາ, ເຄື່ອນໄຫວ ແລະ ຈັງຫວະ) | 20-25 ( 80) | 25-30 (100) | 30-35 (120) |
| 3 | ຫຼິ້ນຕາມມຸມ | 30-35 | 25-30 | 20-25 |
| 4 | ຫຼິ້ນກາງແຈ້ງ | 20-25 | 20-25 | 20-25 |
| 5 | ຫຼິ້ນ, ເຄື່ອນໄຫວກິດຈະກຳຕາມໃຈ | 30-35 | 25-30 | 20-25 |
| 6 | ນອນຕອນທ່ຽງ | 70-75 | 60-65 | 50-55 |
| 7 | ພັກຜ່ອນຫຼັງຫຼິ້ນ ຫຼື ຮຽນໃນແຕ່ລະຄັ້ງ ( ລວມມີ 6 ກິດຈະກຳ ) | 5-10 (30) | 5-10 (30) | 5-10 (30) |
| 8 | ອະນາໄມປາກ, ແຂ້ວ, ມື ແລະ ຕີນຕົວ | 10-15 | 10-15 | 10-15 |
| 9 | ອາຫານຫວ່າງແຕ່ລະຄັ້ງ (ຕອນເຊົ້າ ແລະ ຕອນບ່າຍ) | 10-15 (20) | 10-15 (20) | 10-15 (20) |
| 10 | ອາຫານທ່ຽງ | 30-35 | 30-35 | 30-35 |
| 11 | ສົ່ງເດັກໃຫ້ຜູ້ປົກຄອງ | 20-25 | 20-25 | 20-25 |

5.6 ຕາຕະລາງສັງລວມເວລາຮຽນ, ຫຼິ້ນ, ເຄື່ອນໄຫວອື່ນໆໃນໜຶ່ງມື້, ອາທິດ, ເດືອນ ແລະ ປີຮຽນ

| | | **ຈຳນວນຊົ່ວໂມງແຕ່ລະຊັ້ນຮຽນ** | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | | ອະນຸບານ 1 | | | | ອະນຸບານ 2 | | | | ອະນຸບານ 3 | | | |
| **ກິດຈະກຳ** | ເວລາ | ມື້ | ອາທິດ | **ເດືອນ** | ປີ | ມື້ | ອາທິດ | **ເດືອນ** | ປີ | ມື້ | ອາທິດ | **ເດືອນ** | **ປີ** |
| 1.ການຮຽນ | **ຊົ່ວໂມງ** | 1: 20 | 6:40 | 26:40 | 213:20 | 1:40 | 8:20 | 33:20 | 257:40 | 2:00 | 10:00 | 40:00 | 320 |
| 2.ການຫຼິ້ນ | **ຊົ່ວໂມງ** | 1: 20 | 6.40 | 26:40 | 213:20 | 1: 10 | 5:50 | 23:20 | 186:40 | 1:00 | 5:00 | 20:00 | 160 |
| 3.ການນອນ | **ຊົ່ວໂມງ** | 1: 10 | 5:50 | 23:20 | 186:40 | 1: 00 | 5:00 | 20:00 | 176:40 | 0:50 | 4:10 | 16:40 | 133:20 |
| 4.ການກິນ | **ຊົ່ວໂມງ** | 0:30 | 2:30 | 10:00 | 80:00 | 0:30 | 2:30 | 10:00 | 80:00 | 0:30 | 2:30 | 10:00 | 80:00 |
| 5.ການອະນາໄມ | **ຊົ່ວໂມງ** | 0:50 | 4:10 | 16:40 | 133:20 | 0:50 | 4:10 | 16:40 | 133:20 | 0:50 | 4:10 | 16:40 | 133:20 |
| 6.ການພັກຜ່ອນ | **ຊົ່ວໂມງ** | 0:10 | 0:50 | 3:20 | 26:40 | 0:10 | 0:50 | 3:20 | 26:40 | 0:10 | 0:50 | 3:20 | 26:40 |
| 7.ການຮັບແລະສົ່ງເດັກ | **ຊົ່ວໂມງ** | 0:40 | 3:20 | 13:20 | 106:40 | 0:40 | 3:20 | 13:20 | 106:40 | 0:40 | 3:20 | 13:20 | 106:40 |
| **ລວມ** | **ຊົ່ວໂມງ** | 6 | 30 | 120 | 960 | 6 | 30 | 120 | 960 | 6 | 30 | 120 | 960 |

**ໝາຍເຫດ:**

- ການກຳນົດໄລຍະເວລາໃນການຫຼິ້ນ, ຮຽນ ແລະ ນອນ ຊັ້ນອະນຸບານປີທີ 1, 2, 3 ມີຄວາມແຕກຕ່າງກັນ.
- ເວລາໃນຕາຕະລາງ 1: 20 ໝາຍເຖິງ 1 ຊົ່ວໂມງ 20 ນາທີ.
- ການກຳນົດໄລຍະເວລາການເຄື່ອນໄຫວອື່ນໆ ໃນຊັ້ນອະນຸບານ ປີທີ 1, 2 ແລະ 3 ໃຊ້ເວລາເທົ່າກັນ.

## 6. ການປະຕິບັດເວລາໃນ ກິດຈະກຳປະຈຳວັນ

6.1 ການຈັດອາຫານສຳລັບເດັກໃນໂຮງຮຽນອະນຸບານ

ໂຮງຮຽນອະນຸບານທີ່ໄດ້ຈັດຕັ້ງການກິນອາຫານຫວ່າງ ແລະ ອາຫານທ່ຽງໃຫ້ເດັກຄວນປະຕິບັດດັ່ງນີ້:

- **ອາຫານຫວ່າງ**

- ອາຫານທີ່ນຳມາເປັນອາຫານຫວ່າງຄວນມີໝາກໄມ້, ເຂົ້າໜົມ, ເຂົ້າຕົ້ມພື້ນເມືອງ, ນ້ຳດື່ມສະອາດ ( ຢ່າງໜ້ອຍ 1 ລິດຕໍ່ 1 ມື້ ), ນ້ຳເຕົາຮູ້, ນ້ຳສາລີ, ນ້ຳຫວານພື້ນເມືອງ.
- ອາຫານຫວ່າງໃນແຕ່ລະວັນມີ 2 ຄັ້ງ: ຕອນເຊົ້າ ແລະ ຕອນບ່າຍ.
- ເວລາໃຫ້ອາຫານຫວ່າງແຕ່ລະຕອນ 10-15 ນາທີ ( ຕອນເຊົ້າ 9:00 ໂມງ ແລະ ຕອນບ່າຍ 3:00 ໂມງ).

- **ອາຫານທ່ຽງ**

- ອາຫານທ່ຽງຄວນໃຫ້ເດັກໄດ້ກິນເຂົ້າ, ຊີ້ນ, ໄຂ່, ພືດຜັກທີ່ມີໃນແຕ່ລະທ້ອງຖິ່ນຕາມລະດູການ. ແຕ່ລະວັນຄວນມີນ້ຳແກງ, ຂົ້ວ ຫຼື ໜຶ້ງ.
- ໄລຍະເວລາໃຫ້ອາຫານທ່ຽງ 30-35 ນາທີ ( ເວລາທີ່ໃຊ້ຄວນປະຕິບັດໃນລະຫວ່າງ 11:00 - 12:00 ໂມງ )
- ອາຫານທີ່ບໍ່ຄວນໃຫ້ເດັກກິນ: ອາຫານບໍ່ສົດ ແລະ ບໍ່ສຸກ, ອາຫານສຳເລັດຮູບທີ່ມີສານເຄມີ, ມີສີ ແລະ ແປ້ງນົວ, ອາຫານປະເພດປີ້ງ, ນ້ຳອັດລົມ ແລະ ເຄື່ອງດອງຕ່າງໆ.

6.2 ການອະນາໄມ

- ອານະໄມປາກ, ແຂ້ວ ( ນຳໃຊ້ 5 ຂັ້ນຕອນຖູແຂ້ວ) ໃຫ້ປະຕິບັດໃນເວລາຕອນເຊົ້າຫຼັງໃຫ້ອາຫານທ່ຽງ ແລະ ອາຫານຫວ່າງ.
- ອານະໄມມື ( ນຳໃຊ້ 7 ຂັ້ນຕອນລ້າງມື ) ໃຫ້ປະຕິບັດຫຼັງການຫຼິ້ນ, ກ່ອນ ແລະ ຫຼັງກິນອາຫານ, ຫຼັງເຂົ້າຫ້ອງນ້ຳທຸກຄັ້ງ.
- ອານະໄມຕົນຕົວເດັກ ( ອາບນ້ຳ )ໃຫ້ປະຕິບັດຫຼັງຕື່ນນອນຕອນທ່ຽງ.
- ເວລາອະນາໄມແຕ່ລະຄັ້ງ 10-15 ນາທີ.

6.3 ການພັກຜ່ອນ

- ການພັກຜ່ອນໃຫ້ປະຕິບັດຫຼັງການຮຽນແຕ່ລະຄັ້ງ 5 ນາທີ .
- ນອນພັກຜ່ອນຕອນທ່ຽງ 50-70 ນາທີ .

6.4 ການຮັບ ແລະ ສົ່ງເດັກ

- ຮັບເດັກຕອນເຊົ້າ 20 ນາທີ
- ສົ່ງເດັກຕອນແລງ 20 ນາທີ

**ໝາຍເຫດ :**

- ການຈັດຕາຕະລາງຫຼິ້ນ, ຮຽນ ແລະ ເຄື່ອນໄຫວກິດຈະກຳໃຫ້ແຕ່ລະໂຮງຮຽນຈັດຕາມສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ.
- ເວລາ ຫຼິ້ນ, ຮຽນ ແລະ ເຄື່ອນໄຫວກິດຈະກຳຕ່າງ ໆກຳນົດໃນຫຼັກສູດ 6 :00 ຊົ່ວໂມງຕໍ່ໜຶ່ງມື້
- ເວລາລັດຖະການແຕ່ 8:00ໂມງ ຫາ 16:00 ໂມງ, ໃນນັ້ນພັກຕອນທ່ຽງ 1:30 ຊົ່ວໂມງ (ລວມເວລາເຮັດວຽກ 6 ຊົ່ວໂມງ 30 ນາທີ ຕໍ່ໜຶ່ງມື້).

## III. ຫຼັກການຈັດປະສົບການ

ການຈັດກິດຈະກຳການຮຽນປະຈຳວັນສຳລັບເດັກອາຍຸ 3 ຫາ 6 ປີ ໃນໂຮງຮຽນອະນຸບານແມ່ນການຈັດການຮຽນ-ການສອນແບບບູລະນາການ ເພື່ອໃຫ້ເດັກໄດ້ຮຽນຮູ້ຈາກປະສົບການຕົວຈິງ; ມີຄວາມຮູ້, ຄວາມສາມາດ, ຄຸນສົມບັດ, ມີພັດທະນາການທາງດ້ານຮ່າງກາຍ, ດ້ານອະນາໄມ ແລະ ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ, ດ້ານອາລົມ-ຈິດໃຈ ແລະ ດ້ານສັງຄົມໂດຍອີງຕາມຫຼັກການຈັດປະສົບການ ແລະ ການຮຽນຮູ້ດັ່ງນີ້:

1. ຈັດປະສົບການໃນການຫຼິ້ນ ແລະ ການຮຽນໃຫ້ສອດຄ່ອງກັບລະດັບພັດທະນາການ ແລະ ຄວາມສາມາດຂອງເດັກອາຍຸ 3 - 6 ປີ ເພື່ອໃຫ້ເດັກໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ.
2. ຈັດປະສົບການແບບເອົາເດັກເປັນໃຈກາງໃຫ້ເດັກໄດ້ຄົ້ນຄິດ, ວາງແຜນ, ກ້າຕັດສິນໃຈ, ສະແດງຄວາມຄິດເຫັນເພື່ອຕອບສະໜອງຄວາມຕ້ອງການ, ຄວາມສົນໃຈ, ຄວາມແຕກຕ່າງລະຫວ່າງຕົວເດັກ ແລະ ສະພາບແວດລ້ອມຂອງສັງຄົມທີ່ເດັກອາໄສຢູ່.
3. ຈັດປະສົບການໃຫ້ເດັກໄດ້ຮັບການພັດທະນາໃນຮູບແບບບູລະນາການ ໂດຍເນັ້ນຂະບວນການຮຽນຮູ້ຜ່ານການຫຼິ້ນ, ການປະຕິບັດກິດຈະກຳທີ່ເໝາະສົມກັບໄວ ແລະ ຜົນໄດ້ຮັບ.
4. ຈັດປະສົບການໂດຍມີການຕິດຕາມປະເມີນຜົນ ແລະ ລາຍງານພັດທະນາການເດັກ ໂດຍມີການບັນທຶກຂໍ້ມູນຢ່າງເປັນລະບົບ ແລະ ເປັນຂະບວນການຢ່າງຕໍ່ເນື່ອງ.

5. ຈັດປະສົບການໃນການພັດທະນາເດັກໂດຍໃຫ້ຄອບຄົວ, ໂຮງຮຽນ ແລະ ຊຸມຊົນມີສ່ວນຮ່ວມໃນການວາງແຜນ, ການສະໜັບສະໜູນສື່ການຮຽນ- ການສອນ, ການເຂົ້າຮ່ວມກິດຈະກຳ ແລະ ການປະເມີນຜົນພັດທະນາການຂອງເດັກ.
6. ຈັດປະສົບການໃນການສົ່ງເສີມທັດສະນະ ແລະ ຄ່ານິຍົມໃນການດຳລົງຊີວິດປະຈຳວັນໂດຍການເຝິກລັກສະນະນິດໄສ, ວັດທະນະທຳອັນດີງາມຂອງຊາດ ແລະ ທ້ອງຖິ່ນ.
7. ຈັດປະສົບການໃນລັກສະນະເປັນກິດຈະກຳ, ເກມການສຶກສາບໍ່ໄດ້ຮຽນເປັນລາຍວິຊາຄືຊັ້ນປະຖົມສຶກສາ. ໃນແຕ່ລະວັນຈະມີການຈັດກິດຈະກຳການຮຽນຜ່ານການຫຼິ້ນ ແລະ ປະຕິບັດກິດຈະກຳເປັນກຸ່ມນ້ອຍ ແລະ ກຸ່ມໃຫຍ່ຕາມ 6 ກິດຈະກຳຫຼັກດັ່ງນີ້:
   - ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ
   - ກິດຈະກຳສິລະປະສ້າງສັນ
   - ກິດຈະກຳຫຼິ້ນຕາມມຸມ
   - ກິດຈະກຳໃນວົງມົນ
   - ກິດຈະກຳຫຼິ້ນກາງແຈ້ງ
   - ກິດຈະກຳເກມການສຶກສາ

## IV. ການຈັດກິດຈະກຳການຮຽນ-ການສອນ

**ການຈັດການຮຽນ-ການສອນ ໃນແຕ່ລະມື້ປະກອບດ້ວຍ 6 ກິດຈະກຳຫຼັກດັ່ງນີ້:**

### 1. ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ການເຄື່ອນໄຫວ ແລະ ຈັງຫວະເປັນກິດຈະກຳທີ່ກຳນົດຂຶ້ນມາເພື່ອເຝິກແອບໃຫ້ອະໄວຍະວະທຸກພາກສ່ວນຂອງຮ່າງກາຍມີຄວາມສຳພັນກັນໃນການເຄື່ອນໄຫວອອກກຳລັງກາຍເຊິ່ງປະກອບມີ 2 ກິດຈະກຳຫຼັກຄື :

- ກິດຈະກຳພື້ນຖານ: ເຝິກແອບໃຫ້ເດັກປະຕິບັດຕາມສຽງສັນຍານ, ຈັງຫວະ ແລະ ຂໍ້ຕົກລົງ.
- ກິດຈະກຳທີ່ມີຄວາມສຳພັນກັບເນື້ອໃນບົດຮຽນ: ເຝິກແອບການເປັນຜູ້ນຳພາ ແລະ ຜູ້ເຮັດຕາມຄຳສັ່ງ, ເຝິກແອບຕາມຈິນຕະນາການ ຫຼື ຄົ້ນຄິດຢ່າງສ້າງສັນເຮັດທ່າທາງຕາມເນື້ອໃນ, ເຝິກແອບບົດບາດສົມມຸດ.

**2. ກິດຈະກຳວົງມົນ**

ກິດຈະກຳວົງມົນເປັນກິດຈະກຳທີ່ກຳນົດຂຶ້ນມາໃຫ້ເປັນກິດຈະກຳຫຼັກທີ່ຊ່ວຍສົ່ງເສີມປະສົບການຜູ້ຮຽນທາງດ້ານການສື່ຄວາມໝາຍທາງພາສາລາວ (ຄຳຄ່ອງ, ນິທານ,ຮ້ອງເພງ ແລະ ຮຽນຮູ້ພື້ນຖານກ່ຽວກັບຕົວອັກສອນ), ພື້ນຖານຄະນິດສາດ (ຈຳນວນ, ຕົວເລກ, ຮູບຊົງເລຂາຄະນິດ...), ພື້ນຖານວິທະຍາສາດທຳມະຊາດ, ສັງຄົມ ແລະ ຄຸນສົມບັດ.

**3. ກິດຈະກຳສິລະປະສ້າງສັນ**

ກິດຈະກຳສິລະປະສ້າງສັນເປັນກິດຈະກຳທີ່ກຳນົດຂຶ້ນມາເພື່ອພັດທະນາຜູ້ຮຽນທາງດ້ານສິລະປະກຳ ແລະ ຫັດຖະກຳ: ແຕ້ມຮູບ, ທາສີ, ເປົ່າສີ , ຫຼິ້ນສີ, ຢອດສີ, ພິມຮູບ, ປັ້ນ, ພັບ, ຈີກ-ຕິດ, ຕັດ-ຕິດ, ຮ້ອຍ ແລະ ປະດິດສິ່ງຕ່າງໆ.

**4. ກິດຈະກຳຫຼິ້ນຕາມມຸມ**

ການຫຼິ້ນຕາມມູມເປັນກິດຈະກຳທີ່ກຳນົດຂຶ້ນມາເພື່ອພັດທະນາຜູ້ຮຽນທາງດ້ານການຄົ້ນຄິດສິ່ງໃໝ່ໆ ແລະ ການພັດທະນາພາສາ ໂດຍຜ່ານການຫຼິ້ນຕາມໃຈຕາມມຸມຫຼິ້ນຕ່າງໆ ທີ່ຈັດໄວ້ຕາມຫ້ອງຮຽນ: ມຸມສຳລັບອ່ານໜັງສື, ມຸມວິທະຍາສາດ, ມຸມບ້ອກ, ມຸມເຮືອນນ້ອຍ ...

**5. ກິດຈະກຳຫຼິ້ນກາງແຈ້ງ**

ກິດຈະກຳການຫຼິ້ນກາງແຈ້ງເປັນກິດຈະກຳທີ່ກຳນົດຂຶ້ນມາ ເພື່ອຊ່ວຍພັດທະນາຜູ້ຮຽນທາງດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ, ພາສາ, ສະຕິປັນຍາ, ຄວາມຮູ້ພື້ນຖານທາງວິທະຍາສາດທຳມະຊາດ ແລະ ວິທະຍາສາດສັງຄົມ, ອາລົມ-ຈິດໃຈ ເຊິ່ງສະແດງອອກໃນການຫຼິ້ນໃນເດີ່ນ ຫຼື ນອກຫ້ອງຮຽນປະກອບມີການຫຼິ້ນນ້ຳ, ຊາຍ, ການຫຼິ້ນແບບຫຼິ້ນເຄື່ອນໄຫວ, ແບບຫຼິ້ນພື້ນເມືອງ ແລະ ເຄື່ອງຫຼິ້ນປະເພດໂອ້ນຊາ, ຂີ່ວໄຕ່, ແປ້ນຕະລູດ.

**6. ກິດຈະກຳເກມການສຶກສາ**

ເກມການສຶກສາເປັນກິດຈະກຳທີ່ກຳນົດຂຶ້ນມາເພື່ອຊ່ວຍພັດທະນາຜູ້ຮຽນທາງດ້ານພື້ນຖານທາງພາສາ, ຄະນິດສາດ, ວິທະຍາສາດ, ອາລົມ-ຈິດໃຈ ແລະ ສັງຄົມໂດຍຜ່ານເກມການຫຼິ້ນທີ່ມີກະຕິກາການຫຼິ້ນເຊິ່ງປະກອບມີເກມຈັບຄູ່, ເກມລຽນລຳດັບ, ເກມຕໍ່ຮູບພາບ, ເກມລອດໂຕ ຫຼື ສຶກສາລາຍລະອຽດຮູບພາບ, ໂດມີໂນ.

## V. ການຕິດຕາມພັດທະນາການເດັກອະນຸບານ

ການຕິດຕາມພັດທະນາການເດັກອະນຸບານ ແມ່ນຕິດຕາມໂດຍອີງໃສ່ສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ, ດ້ານພາສາ , ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ, ດ້ານອາລົມຈິດ ແລະ ດ້ານສັງຄົມ ໂດຍປະຕິບັດເປັນປົກກະຕິໃນກິດຈະກຳປະຈຳວັນເປັນຂະບວນການຕໍ່ເນື່ອງ ເພື່ອນຳເອົາຂໍ້ມູນການຕິດຕາມການເຄື່ອນໄຫວຫຼິ້ນ,ການຮຽນໃນແຕ່ລະວັນມາສຶກສາ ແລະ ນຳໃຊ້ເຂົ້າໃນການວາງແຜນຈັດກິດຈະກຳທີ່ສົ່ງເສີມໃຫ້ເດັກໄດ້ຮັບການພັດທະນາຕາມເປົ້າໝາຍ ແລະ ຈຸດປະສົງຂອງຫຼັກສູດ.

ດັ່ງນັ້ນ, ການຕິດຕາມພັດທະນາການເດັກ 3-6 ປີ ແມ່ນອີງຕາມຫຼັກການດັ່ງລຸ່ມນີ້:

1. ຕິດຕາມພັດທະນາການເດັກຄົບທຸກດ້ານຕາມແບບຕິດຕາມພັດທະນາການ ແລະ ນຳເອົາຜົນການຕິດຕາມມາພັດທະນາເດັກຕໍ່ໄປ.
2. ຕິດຕາມເປັນລາຍບຸກຄົນຢ່າງສະໝ່ຳສະເໝີຕໍ່ເນື່ອງຕະຫຼອດປີຮຽນ.
3. ຕິດຕາມຢ່າງເປັນລະບົບມີການວາງແຜນເລືອກໃຊ້ເຄື່ອງມື ແລະ ບັນທຶກໄວ້ເປັນຫຼັກຖານ.
4. ຕິດຕາມຕາມສະພາບຕົວຈິງດ້ວຍຫຼາຍວິທີການທີ່ເໝາະສົມຄື: ການສຳພາດ, ການສົນທະນາ ແລະ ການສັງເກດການປະຕິບັດກິດຈະກຳ ແລະ ພຶດຕິກຳທີ່ສະແດງອອກ ໂດຍມີການບັກທຶກຂໍ້ມູນໄວ້ໃນປຶ້ມຕິດຕາມພັດທະນາການ ຫຼື ແຟ້ມສະສົມຜົນງານຢ່າງເປັນລະບົບ, ເພື່ອໃຊ້ເປັນຫຼັກຖານໃນການປັບປຸງພັດທະນາການແຕ່ລະດ້ານຂອງເດັກ.
5. ສະຫຼຸບພັດທະນາການເດັກເປັນໄລຍະ ແລະ ມີບົດບັນທຶກການສະຫຼຸບຜົນງານໄວ້ໃນປຶ້ມຮຽກຊື່, ປຶ້ມແຟ້ມສະສົມຜົນງານ ແລະ ປຶ້ມຕິດຕາມພັດທະນາການຂອງເດັກແຕ່ລະຄົນ.

## VI. ການກຳນົດປຶ້ມແບບເຝິກຫັດ ຫຼື ປຶ້ມເສີມປະສົບການສຳລັບເດັກອະນຸບານ

ຫຼັກສູດການສຶກສາຊັ້ນອະນຸບານປີ 2012 ກຳນົດຫຼັກການຈັດປະສົບການສຳລັບເດັກອາຍຸ 3-6 ປີ ເພື່ອພັດທະນາເດັກຮອບດ້ານຢ່າງຕໍ່ເນື່ອງໃນຮູບແບບບູລະນາການ, ບໍ່ສອນເປັນລາຍວິຊາຢຶດຫຼັກການບູລະນາການທີ່ວ່າ:" ໜຶ່ງແນວຄິດເດັກສາມາດຮຽນຮູ້ໄດ້ຫຼາຍກິດຈະກຳ, ໜຶ່ງກິດຈະກຳເດັກສາມາດຮຽນຮູ້ໄດ້ຫຼາຍທັກສະ ແລະ ຫຼາຍປະສົບການສຳຄັນ " ດັ່ງນັ້ນປຶ້ມແບບເຝິກຫັດ ຫຼື ປຶ້ມເສີມປະສົບການຄວນມີຫຼາຍແບບໃຫ້ເດັກໄດ້ມີໂອກາດເລືອກ. ການສຳຜັດ, ເບິ່ງ ແລະ ອ່ານປຶ້ມດັ່ງກ່າວເລື້ອຍໆ ຈະເຮັດໃຫ້ເດັກຄຸ້ນເຄີຍກັບການໃຊ້ປຶ້ມ ແລະ ຄຸ້ນເຄີຍກັບຕົວອັກສອນ.

ສິ່ງສຳຄັນທີ່ຄວນຄຳນຶງເຖິງຄື: ຫາກເດັກມີປະສົບປະການທີ່ດີ ແລະ ມີຄວາມມ່ວນຊື່ນໃນການໃຊ້ປຶ້ມຈະເປັນສ່ວນສຳຄັນທີ່ຊ່ວຍປູກຝັງຈິດສຳນຶກໃຫ້ເດັກມີນິດໄສຮັກການອ່ານໄດ້ເປັນຢ່າງດີ.

1. **ຄຸນລັກສະນະຂອງປຶ້ມແບບເຝິກຫັດ ຫຼື ປຶ້ມເສີມປະສົບການສຳລັບເດັກອະນຸບານ**

- ສອດຄ່ອງກັບຫຼັກການຈັດປະສົບປະການການຮຽນຕາມຫຼັກສູດການສຶກສາຊັ້ນອະນຸບານ.
- ກົງກັບຈຸດປະສົງ ແລະ ເລື່ອງທີ່ສອນໂດຍໃຫ້ມີປະສົບປະການພື້ນຖານທີ່ສອດຄ່ອງຕໍ່ການຮຽນຮູ້ຂອງເດັກເມື່ອເຂົ້າສູ່ໄວທີ່ສູງຂຶ້ນ.
- ເໝາະສົມກັບໄວ ແລະ ຄວາມສາມາດຂອງເດັກ.
- ເໝາະສົມກັບສະພາບແວດລ້ອມຂອງທ້ອງຖິ່ນທີ່ເດັກອາໄສຢູ່.
- ເນື້ອໃນ ແລະ ວິທີການທີ່ນຳມາສະເໜີໃນປຶ້ມຄວນສົ່ງເສີມໃຫ້ເດັກມີໂອກາດເຝິກຄິດເປັນ, ເຮັດເປັນ ແລະ ກ້າສະແດງຄວາມຄິດເຫັນດ້ວຍຄວາມໝັ້ນໃຈ, ນຳໃຊ້ງ່າຍ ແລະ ໃຊ້ໄດ້ຫຼາຍກິດຈະກຳ.
- ຮູບພາບຊັດເຈນເໝາະສົມກັບໄວອາຍຸ, ອອກແບບຮູບພາບຢ່າງງ່າຍດາຍເຮັດໃຫ້ເລື່ອງຕໍ່ເນື່ອງ ແລະ ຕ້ອງເປັນຮູບພາບທີ່ບໍ່ເຮັດໃຫ້ເດັກເກີດຄວາມຢ້ານ.
- ຊະນິດເຈ້ຍ, ສີເໝາະສົມກັບສາຍຕາ, ບໍ່ໃຊ້ສີສະທ້ອນແສງ ແລະ ມີຊ່ອງຫວ່າງພັກສາຍຕາຂະໜາດເໝາະສົມ.
- ພາສາທີ່ໃຊ້ຄວນມີລັກສະນະເປັນພາສາທີ່ໃຊ້ໃນຊີວິດປະຈຳວັນ, ພາສາສັນຍະລັກ, ພາສາຄຳຄ່ອງ (ກາບກອນ) ທີ່ສົ່ງເສີມໃຫ້ເດັກມີຈິນຕະນາການ.
- ຈຳນວນໜ້າ ແລະ ຈຳນວນຄຳສັບເໝາະສົມກັບໄວ.
- ຂະໜາດຂອງຕົວອັກສອນເໝາະສົມກັບຂະໜາດຂອງຮູບເຫຼັ້ມ.

2. **ການເລືອກປຶ້ມແບບເຝິກຫັດ ຫຼື ເສີມປະສົບປະການສຳລັບເດັກອະນຸບານ**

- ເລືອກປຶ້ມນິທານ, ປຶ້ມກາບກອນ, ປຶ້ມເພງ ແລະ ອື່ນໆ ທີ່ສົ່ງເສີມການຮຽນຮູ້ຂອງເດັກອະນຸບານ, ເຊິ່ງໄດ້ລວບລວມຈາກການພິຈາລະນາຄັດເລືອກຂອງໜ່ວຍງານທີ່ກ່ຽວຂ້ອງ.
- ເລືອກປຶ້ມແບບເຝິກຫັດ ແລະ ປຶ້ມເສີມປະສົບປະການທີ່ສົ່ງເສີມ ແລະ ພັດທະນາຜູ້ຮຽນຕາມມາດຖານຄຸນລັກສະນະທີ່ກຳນົດໄວ້ໃນຫຼັກສູດການສຶກສາຊັ້ນອະນຸບານສຶກສາໃນແຕ່ລະຂັ້ນ.

## VII. ການກຳນົດເຄື່ອງຫຼິ້ນສຳລັບເດັກອະນຸບານ

### 1. ເຄື່ອງຫຼິ້ນຕາມມຸມ

ໂຮງຮຽນອະນຸບານແຕ່ລະແຫ່ງຕ້ອງມີເຄື່ອງຫຼິ້ນຕາມມຸມດັ່ງນີ້:

- ເຄື່ອງຫຼິ້ນເຮືອນນ້ອຍ (ຕຸກກະຕາ, ເຄື່ອງຄົວກິນ)
- ເຄື່ອງຫຼິ້ນພະຍາບານ (ຊຸດເຄື່ອງນຸ່ງໝໍ, ເຄື່ອງມືແພດ)
- ເຄື່ອງຫຼິ້ນຮ້ານຄ້າ (ເຄື່ອງກິນ, ເຄື່ອງໃຊ້).
- ເຄື່ອງຫຼິ້ນທຳມະຊາດ (ເຄື່ອງຈິງຕ່າງໆ).
- ເຄື່ອງຫຼິ້ນ ວິທະຍາສາດ (ເຄື່ອງຜອງ, ວັດແທກ...).
- ເຄື່ອງຫຼິ້ນປະດິດສ້າງບ້ອກ (ບ້ອກປຼາສຕິກ ແລະ ໄມ້ກ້ອນຮູບຊົງຕ່າງໆ).
- ເຄື່ອງຫຼິ້ນເກມການສຶກສາ (ເກມຈັບຄູ່, ເກມລຽງລຳດັບ, ເກມຕໍ່ຮູບ, ເກມໂດມີໂນ, ເກມລອດໂຕ).

### 2. ເຄື່ອງຫຼິ້ນຕາມເດີ່ນ

ໂຮງຮຽນອະນຸບານແຕ່ລະແຫ່ງຕ້ອງມີເຄື່ອງຫຼິ້ນຕາມເດີ່ນດັ່ງນີ້:

- ເຄື່ອງຫຼິ້ນຊາຍ (ກະປ໋ອງ, ກະໂປະ ແລະ ເຄື່ອງທີ່ໃຊ້ຕັກ ຫຼື ຜອງອື່ນໆ).
- ເຄື່ອງຫຼິ້ນນ້ຳ (ຄຸ, ໂອ, ເສື້ອກັນເປື້ອນປຼາສຕິກ).
- ເຄື່ອງຫຼິ້ນເຮືອນນ້ອຍ (ຕຸກກະຕາ, ເຄື່ອງນຸ່ງຫົ່ມ, ເຄື່ອງຄົວກິນ).
- ເຄື່ອງຫຼິ້ນວຽກກ່ຽວກັບຊ່າງ (ເຄື່ອງມືຊ່າງໄມ້, ຊ່າງກໍ່).
- ເຄື່ອງຫຼິ້ນລອດທໍ່ ຫຼື ອຸໂມງ (ຢາງຕີນລົດ, ຟຸຍ).
- ເຄື່ອງຫຼິ້ນໄຕ່ຂົວ, ຂີ່ໂອ້ນຊາ ແລະ ເດື່ອງດ່າງ.
- ເຄື່ອງຫຼິ້ນແບບຫຼິ້ນເຄື່ອນໄຫວອື່ນໆ ແລະ ແບບຫຼິ້ນພື້ນເມືອງ.

3. **ສວນວິທະຍາສາດ**

- ສວນທົດລອງ ປູກຜັກ, ດອກໄມ້.
- ສະຖານທີ່ທົດລອງລ້ຽງສັດນ້ຳ ຫຼື ສັດປີກ.

## VIII. ການນຳໃຊ້ຫຼັກສູດຊັ້ນອະນຸບານສຶກສາ

ການນຳໃຊ້ຫຼັກສູດອະນຸບານຄວນມີການຮ່ວມມືຈາກພາກສ່ວນໂຮງຮຽນ, ຄອບຄົວ, ຊຸມຊົນໃນແຕ່ລະທ້ອງຖິ່ນ ເພື່ອໃຫ້ມີສ່ວນຮ່ວມໃນການພັດທະນາເດັກແບບຮອບດ້ານດັ່ງນີ້:

1. **ການນຳໃຊ້ຫຼັກສູດສຳລັບຄູສອນ, ຜູ້ອຳນວຍການ ແລະ ພາກສ່ວນກ່ຽວຂ້ອງ**

1.1 ການກະກຽມກ່ອນນຳໃຊ້ຫຼັກສູດ

- ຄູສອນອະນຸບານຕ້ອງມີຄວາມຮູ້, ຄວາມສາມາດໃນການນຳໃຊ້ຫຼັກສູດໂດຍຜ່ານການຮຽນຈາກໂຮງຮຽນສ້າງຄູ ຫຼື ການອົບຮົມກ່ຽວກັບການສອນອະນຸບານໃນໄລຍະສັ້ນ ຫຼື ຍາວ.
- ພັດທະນາບຸກຄະລາກອນທີ່ກ່ຽວຂ້ອງ: ຜູ້ອຳນວຍການ, ຄູສອນ, ອຳນາດການປົກຄອງໃຫ້ມີຄວາມຮູ້, ຄວາມເຂົ້າໃຈກ່ຽວກັບຫຼັກສູດອະນຸບານໃຫ້ເລິກເຊິ່ງ.
- ສຶກສາຄົ້ນຄວ້າ, ລວບລວມ ແລະ ວິເຄາະຂໍ້ມູນດ້ານຕ່າງ ໆ ທີ່ກ່ຽວຂ້ອງກັບວິທີການສຶກສາອົບຮົມ, ຄວາມຕ້ອງການຂອງຜູ້ປົກຄອງເດັກ, ວັດທະນະທຳ ແລະ ຮີດຄອງປະເພນີຂອງທ້ອງຖິ່ນ ແລະ ຄວາມພ້ອມຂອງໂຮງຮຽນທີ່ຈະນຳໃຊ້ຫຼັກສູດອະນຸບານໃນແຕ່ລະຂັ້ນຮຽນ.
- ສຶກສາຈຸດປະສົງຕາມແຜນການຈັດປະສົບການ, ຄູ່ມືຄູ ແລະ ແບບເຝິກຫັດໃນການຈັດການຮຽນການສອນເພື່ອເນັ້ນການສົ່ງເສີມພັດທະນາການເດັກໃຫ້ຖືກກັບໄວອາຍຸ.
- ລວບລວມເອກະສານ: ຫຼັກສູດອະນຸບານ, ຄູ່ມືຄູ, ແບບເຝິກຫັດ ແລະ ສື່ການຮຽນການສອນຕ່າງ ໆ ໃຫ້ພຽງພໍເພື່ອໃຊ້ເປັນທິດທາງໃນການຈັດການຮຽນ-ການສອນ.

1.2 ການນຳໃຊ້ເນື້ອໃນຂອງຫຼັກສູດ

- ຄົ້ນຄວ້າເນື້ອໃນທີ່ກຳນົດໄວ້ໃນຫຼັກສູດໂດຍໃຫ້ຄູສຶກສາເບິ່ງຄວາມສາມາດ ຫຼື ພຶດຕິກຳການຮຽນຂອງເດັກທີ່ຕົນສອນ, ຖ້າເດັກຈຳນວນຫຼາຍບໍ່ສາມາດຮຽນເນື້ອໃນໃດໜຶ່ງໃນເວລາທີ່ກຳນົດໃຫ້ຄູຕ້ອງເພີ່ມເວລາຮຽນຂຶ້ນ.

- ນຳໃຊ້ເນື້ອໃນທີ່ໄດ້ກຳນົດໄວ້ໃນຫຼັກສູດໃຫ້ສອດຄ່ອງກັບພັດທະນາການເດັກ.
- ສ້າງແຜນການສອນ, ແຕ່ງບົດສອນ, ນຳໃຊ້ສື່ການຮຽນ-ການສອນທີ່ກະຊວງສຶກສາທິການປະກອບໃຫ້ ແລະ ຄູແຕ່ລະໂຮງຮຽນປະດິດຂຶ້ນເອງໂດຍນຳໃຊ້ວັດຖຸທີ່ມີໃນທ້ອງຖິ່ນໂດຍໃຫ້ຄູສອນຄຳນຶງເຖິງຄວາມຍາກງ່າຍຕໍ່ການຮັບຮູ້ ແລະ ການຮຽນຮູ້ຕາມຄວາມສາມາດຂອງເດັກ ແລະ ຄວາມແຕກຕ່າງທາງດ້ານສັງຄົມ-ວັດທະນະທຳຂອງທ້ອງຖິ່ນ.

1.3 ການວາງແຜນການສອນ

ການວາງແຜນການສອນຕ້ອງເລັ່ງໃສ່ການຈັດການຮຽນ-ການສອນໃຫ້ເດັກໄດ້ຄົ້ນຄິດ, ວາງແຜນ, ຕັດສິນໃຈ, ສະແດງຄວາມຄິດເຫັນຫຼືການສອນ ແບບເດັກເປັນໃຈກາງ, ຄູຄວນຄຳນຶງເຖິງການພັດທະນາເດັກແບບຮອບດ້ານ ແລະ ຈັດກິດຈະກຳປະຈຳວັນໃຫ້ມີການຮຽນໂດຍຜ່ານການຫຼິ້ນ ແລະ ປະຕິບັດຕົວຈິງຕາມແຜນການສອນ, ປຶ້ມຄູ່ມືຄູ ແລະ ແບບເຝິກຫັດກຳນົດໄວ້.

1.4 ການຈັດສະພາບແວດລ້ອມ

ການຈັດສະພາບແວດລ້ອມສຳລັບການຮຽນຮູ້ຄວນຈັດໃຫ້ມີທັງຄວາມຮັກຄວາມອົບອຸ່ນຄ້າຍຄືກັນກັບຢູ່ເຮືອນ ຫຼື ຄອບຄົວ ໃນຫ້ອງຮຽນຕ້ອງມີມູມຫຼິ້ນ, ນອກຫ້ອງຮຽນຕ້ອງມີເດີ່ນຫຼິ້ນ, ຮັກສາຄວາມສະອາດ, ຄວາມປອດໄພຈາກສິ່ງແວດລ້ອມທັງພາຍໃນ ແລະ ນອກຫ້ອງຮຽນ ເພື່ອຊ່ວຍໃຫ້ເດັກໄດ້ຮັບການພັດທະນາ ແລະ ຮຽນຮູ້ຢ່າງມີຄວາມເບີກບານມ່ວນຊື່ນ.

## 2. ການມີສ່ວນຮ່ວມຂອງຜູ້ປົກຄອງເດັກໃນການນຳໃຊ້ຫຼັກສູດ

ຜູ້ປົກຄອງເດັກແຕ່ລະຄົນມີວິທີການໃນການລ້ຽງດູ ແລະ ສຶກສາອົບຮົມເດັກທີ່ແຕກຕ່າງກັນຕາມຮີດຄອງປະເພນີ ແລະ ສະພາບແວດລ້ອມທາງສັງຄົມຂອງທ້ອງຖິ່ນທີ່ຕົນເອງອາໄສຢູ່. ຫຼັກສູດອະນຸບານເປັນບ່ອນອີງເພື່ອໃຫ້ຜູ້ປົກຄອງເດັກສາມາດຊ່ວຍຄູໃນການຈັດກິດຈະກຳດັ່ງນີ້:

ສຶກສາອົບຮົມເດັກໃນຄອບຄົວໃຫ້ສອດຄ່ອງກັບພັດທະນາການຂອງເດັກ, ຕິດຕາມ ແລະ ປະເມີນຜົນພັດທະນາການທຸກດ້ານຂອງເດັກໂດຍການສັງເກດເດັກ, ຮັບຮູ້ຄວາມແຕກຕ່າງລະຫວ່າງເດັກດ້ວຍກັນ, ຖ້າເຫັນວ່າເດັກມີພັດທະນາການຊ້າກ່ວາປົກກະຕິຄວນປຶກສາຄູ ຫຼື ແພດເພື່ອໃຫ້ການຊ່ວຍເຫຼືອເດັກໃນຂັ້ນຕໍ່ໄປ, ຊຸກຍູ້ໃຫ້ລູກຫຼານມາໂຮງຮຽນເປັນປົກກະຕິສິ່ງເສີມໃຫ້ເຂົາເຈົ້າໄດ້ເຂົ້າຮ່ວມກິດຈະກຳຕ່າງ ໆ ໃນໂຮງຮຽນຕາມເວລາທີ່ເໝາະສົມ ແລະ ຊອກຫາແຫຼ່ງທຶນ, ອຸປະກອນການຮຽນ-ການສອນມາໃຫ້ໂຮງຮຽນອະນຸບານ.

### 3. ການຕິດຕາມ, ປະເມີນຜົນການນຳໃຊ້ຫຼັກສູດ

ການຕິດຕາມປະເມີນຜົນການປະຕິບັດຫຼັກສູດມີ 3 ໄລຍະດັ່ງນີ້:

- ການປະເມີນຜົນກ່ອນນຳໃຊ້ຫຼັກສູດໂດຍໂຮງຮຽນເປັນຜູ້ປະເມີນກັບເດັກໃນຕົ້ນປີຮຽນຂອງແຕ່ລະປີ.
- ການປະເມີນຜົນໃນໄລຍະການນຳໃຊ້ຫຼັກສູດໂດຍຄູສອນ, ຜູ້ປົກຄອງເປັນຜູ້ຊ່ວຍສັງເກດ ແລະ ຕິດຕາມພັດທະນາການແຕ່ລະດ້ານ.
- ການປະເມີນຜົນຫຼັງຈາກນຳໃຊ້ຫຼັກສູດໂດຍໂຮງຮຽນເປັນຜູ້ປະເມີນກັບເດັກໃນທ້າຍພາກຮຽນຂອງແຕ່ລະປີ.

### 4. ການລາຍງານຜົນການປະຕິບັດຫຼັກສູດ

ການລາຍງານຜົນຂອງການປະຕິບັດຫຼັກສູດໃໝ່ແມ່ນມີຄວາມສຳຄັນ ແລະ ຈຳເປັນທີ່ຈະຕ້ອງລາຍງານໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຮັບຊາບຂໍ້ມູນທີ່ຄວນປັບປຸງເປັນແຕ່ລະໄລຍະຕາມຂັ້ນຕອນດັ່ງນີ້:

- ຄູສອນລາຍງານໃຫ້ຜູ້ອຳນວຍການໃນໂຮງຮຽນທຸກໆເດືອນ ແລະ ພາກຮຽນ.
- ຜູ້ອຳນວຍການໂຮງຮຽນ ລາຍງານໃຫ້ຜູ້ປົກຄອງເດັກ, ສະມາຄົມພໍ່ແມ່ນັກຮຽນ, ອົງການຈັດຕັ້ງບ້ານທຸກໆເດືອນ ແລະ ພາກຮຽນ.
- ຜູ້ອຳນວຍການໂຮງຮຽນ ລາຍງານໃຫ້ຫ້ອງການສຶກສາທິການເມືອງ ພາກຮຽນລະຄັ້ງ
- ຫ້ອງການສຶກສາທິການ ແລະ ກິລາປະຈຳເມືອງລາຍງານ ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ ພາກຮຽນລະຄັ້ງ.
- ພະແນກສຶກສາທິການ ແລະ ກິລາປະຈຳແຂວງ,ນະຄອນຫຼວງ ລາຍງານໃຫ້ກົມອະນຸບານ ແລະ ປະຖົມສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ພາກສ່ວນກ່ຽວຂ້ອງໃນກະຊວງສຶກສາທິການ ແລະ ກິລາ ປີລະຄັ້ງ.
- ກົມອະນຸບານ ແລະ ປະຖົມສຶກສາ ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ມີໜ້າທີ່ເກັບກຳຂໍ້ມູນ ແລະ ຮຽບຮຽງຫຼັກສູດຄືນໃໝ່ຕາມຄວາມເໝາະສົມ.

## IX. ການເລື່ອນຊັ້ນການສຶກສາລະຫວ່າງຊັ້ນອະນຸບານສຶກສາປີທີ 3 ຫາ ຊັ້ນປະຖົມສຶກສາ ປີທີ 1

### 1. ຄວາມໝາຍຄວາມສຳຄັນຂອງການເລື່ອນຊັ້ນຮຽນ

ການເລື່ອນຊັ້ນການສຶກສາລະຫວ່າງຊັ້ນອະນຸບານສຶກສາປີທີ 3 ຫາຊັ້ນປະຖົມສຶກສາປີທີ 1 ແມ່ນໄລຍະທີ່ມີຄວາມສຳຄັນທີ່ສຸດເຊິ່ງເປັນໄລຍະເຊື່ອມຕໍ່ການສຶກສາລະດັບອະນຸບານສຶກສາ ແລະ ລະດັບປະຖົມສຶກສາ. ພາກສ່ວນຕ່າງໆທີ່ກ່ຽວຂ້ອງຄວນເອົາໃຈໃສ່ການຈັດການຮຽນການສອນຂອງຊັ້ນ

ອະນຸບານປີທີ 3 ແລະ ຂັ້ນປະຖົມສຶກສາປີທີ 1 ໃຫ້ຕໍ່ເນື່ອງກັນຕາມຫຼັກສູດ ແລະ ສະມັດຖະພາບດ້ານການກຽມຄວາມພ້ອມຂອງເດັກອະນຸບານ ກ່ອນເຂົ້າຮຽນໃນໂຮງຮຽນປະຖົມ.

**2. ບົດບາດ ແລະ ໜ້າທີ່ຂອງພາກສ່ວນທີ່ກ່ຽວຂ້ອງໃນການເລື່ອນຊັ້ນຮຽນ**

ການເລື່ອນຊັ້ນການສຶກສາລະຫວ່າງຂັ້ນອະນຸບານ 3 ຫາ ຂັ້ນປະຖົມສຶກສາປີທີ 1 ເຮັດໃຫ້ເດັກມີຄວາມພ້ອມໃນລະດັບດີນັ້ນ ຕ້ອງໄດ້ຮັບການຮ່ວມມືຈາກພາກສ່ວນຕ່າງໆເຊິ່ງມີບົດບາດ ແລະ ໜ້າທີ່ດັ່ງນີ້:

2.1 ຜູ້ບໍລິຫານໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມ.

ຜູ້ບໍລິຫານໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມມີບົດບາດສຳຄັນໃນການເຊື່ອມຕໍ່ລະຫວ່າງຫຼັກສູດຂັ້ນອະນຸບານສຶກສາປີທີ3 ກັບຫຼັກສູດຂັ້ນປະຖົມສຶກສາປີທີ 1 ໂດຍສຶກສາຄົ້ນຄວ້າຫຼັກສູດທັງ 2 ຊັ້ນຮຽນດັ່ງນີ້:

- ຈັດຫາຫຼັກສູດ ແລະ ເອກະສານດ້ານວິຊາການຕ່າງ ໆ ຂອງຂັ້ນອະນຸບານສຶກສາປີທີ 3 ແລະ ຂັ້ນປະຖົມສຶກສາປີທີ 1 ເພື່ອເປັນຄູ່ມືໃຫ້ຄູສອນໃນໂຮງຮຽນໄດ້ສຶກສາຄົ້ນຄວ້າໃຫ້ເຂົ້າໃຈ, ມີຄວາມເປັນເອກະພາບ ແລະ ມີສ່ວນຮ່ວມໃນການຈັດຕັ້ງກອງປະຊຸມຄູສອນຂັ້ນອະນຸບານສຶກສາປີທີ3 ແລະ ຄູສອນ ຂັ້ນປະຖົມສຶກສາປີທີ 1 ເພື່ອຮ່ວມກັນພັດທະນາການເຊື່ອມຕໍ່ການສຶກສາຫຼັກສູດທັງ 2 ຊັ້ນຮຽນເຊັ່ນ: ສ້າງແຜນການສຶກສາຫຼັກສູດທັງ 2 ຫ້ອງໃຫ້ສອດຄ່ອງກັບກຸ່ມເປົ້າໝາຍເດັກອາຍຸ 5 ຫາ 6 ປີ (ອະນຸບານປີທີ 3).
- ຈັດກອງປະຊຸມຄູສອນຂັ້ນອະນຸບານສຶກສາປີທີ 3 ກັບຄູສອນຂັ້ນປະຖົມສຶກສາປີທີ 1 ໃຫ້ມີໂອກາດແລກປ່ຽນບົດຮຽນ ແລະ ປະສົບການເຊິ່ງກັນແລະ ກັນ, ພ້ອມທັງຖອດຖອນບົດຮຽນ, ເຜີຍແຜ່ຂໍ້ມູນຂ່າວສານ ແລະ ຄວາມຮູ້ໃໝ່ທີ່ໄດ້ຮັບຈາກການເຝິກອົບຮົມ ຫຼື ການໄປທັດສະນະສຶກສາທັງພາຍໃນ ແລະ ພາຍນອກໂຮງຮຽນ, ຈັດການພົບປະ ແລະ ປະຕິບັດກິດຈະກຳວັນສຳຄັນຂອງຊາດ ແລະ ບຸນປະເພນີຮ່ວມກັບຜູ້ປົກຄອງເດັກແລະ ຊຸມຊົນບາງໂອກາດເພື່ອໃຫ້ເຂົ້າໃຈ ແລະ ສະໜັບສະໜູນໃນການຈັດການຮຽນ-ການສອນຂອງລູກຫຼານຕົນຢ່າງເໝາະສົມ, ໂຮງຮຽນອະນຸບານຄວນຈັດການແນະນຳເບື້ອງຕົ້ນໃຫ້ຜູ້ປົກຄອງເດັກຢ່າງໜ້ອຍ 2 ຄັ້ງຄື: ກ່ອນເຂົ້າຮຽນຫ້ອງອະນຸບານ 1 ແລະ ກ່ອນຈົບອະນຸບານ 3 ເພື່ອໃຫ້ຜູ້ປົກຄອງເຂົ້າໃຈ,ໃຫ້ຄວາມຮ່ວມມືກັບໂຮງຮຽນໃນການຊ່ວຍເຫຼືອເດັກໃຫ້ປັບຕົວເຂົ້າກັບສະພາບແວດລ້ອມໃໝ່ໃນການສຶກສາຂັ້ນອະນຸບານ ແລະ ການຮຽນໃນຂັ້ນປະຖົມປີທີ 1 ໃຫ້ດີຂຶ້ນ.

2.2 ຄູສອນໂຮງຮຽນອະນຸບານ

ຄູສອນຂັ້ນອະນຸບານສຶກສາປີທີ 3 ຄວນສຶກສາສະມັດຖະພາບດ້ານການກຽມຄວາມພ້ອມເດັກອະນຸບານ (ສ ພ ກ) ແລະ ສະມັດຖະພາບດ້ານການຮຽນຂອງເດັກຊັ້ນປະຖົມສຶກສາປີທີ 1 (ສ ພ ຮ), ໃນນັ້ນຄວນສ້າງຄວາມເຂົ້າໃຈໃຫ້ຜູ້ປົກຄອງໃນການຊ່ວຍເຫຼືອເດັກໃຫ້ປັບຕົວເຂົ້າກັບສະພາບແວດລ້ອມໃໝ່ກ່ອນເຂົ້າຮຽນຂັ້ນປະຖົມສຶກສາປີທີ 1 ດັ່ງຕໍ່ໄປນີ້:

- ເກັບກຳ ແລະ ລວບລວມຂໍ້ມູນກ່ຽວກັບເດັກເປັນລາຍບຸກຄົນໂດຍນຳໃຊ້ " ປຶ້ມຕິດຕາມພັດທະນາການຂອງເດັກ " ສົ່ງຕໍ່ໃຫ້ຄູສອນຂັ້ນປະຖົມສຶກສາປີທີ 1 ສາມາດນຳໃຊ້ຂໍ້ມູນເຫຼົ່ານັ້ນ ເພື່ອຄູຈະໄດ້ຕິດຕາມປະສານສົມທົບກັບຄູສອນຂັ້ນປະຖົມສຶກສາປີທີ 1 ກ່ຽວກັບຜົນການຮຽນຂອງເດັກ.
- ຊ່ວຍເຫຼືອເດັກໃນການປັບຕົວໃຫ້ເຂົ້າກັບສະພາບການຮຽນໃນຂັ້ນຕໍ່ໄປ.
- ຈັດໃຫ້ເດັກມີໂອກາດໄດ້ຮູ້ຈັກ ແລະ ສະໜິດສະໜົມກັບຄູສອນ, ສະພາບແວດລ້ອມ ແລະ ບັນຍາກາດຂອງຫ້ອງຮຽນຂັ້ນປະຖົມສຶກສາປີທີ 1.
- ສົນທະນາ ແລະ ແນະນຳໃຫ້ເດັກຮູ້ກ່ຽວກັບປະສົບການໃນການຮຽນ.
- ຢ້ຽມຢາມການສອນໃນຂັ້ນປະຖົມສຶກສາປີທີ1 ເພື່ອສ້າງໃຫ້ເດັກລົນໃຈ ແລະ ຮັກການຮຽນໃນຊັ້ນຕໍ່ໆໄປ.

2.3. ຄູສອນຂັ້ນປະຖົມສຶກສາປີທີ 1

ຄູສອນຂັ້ນປະຖົມສຶກສາປີທີ 1 ຄວນສຶກສາສະມັດຖະພາບດ້ານການຮຽນຊັ້ນປະຖົມສຶກສາປີທີ 1 (ສ ພ ຮ), ສະມັດຖະພາບດ້ານການກຽມຄວາມພ້ອມຂອງເດັກອະນຸບານສຶກສາປີທີ3 ( ສ ພ ກ ) ເພື່ອໃຊ້ເປັນຂໍ້ມູນໃນການພັດທະນາການຮຽນຮູ້ໃຫ້ມີຄວາມຕໍ່ເນື່ອງໃນການຮຽນ-ການສອນລະຫວ່າງຫ້ອງອະນຸບານ 3 ແລະ ຂັ້ນປະຖົມສຶກສາປີທີ 1 ດັ່ງລາຍລະອຽດຕໍ່ໄປນີ້:

- ຈັດກິດຈະກຳໃຫ້ເດັກ, ຜູ້ປົກຄອງມີໂອກາດໄດ້ສ້າງຄວາມຄຸ້ນເຄີຍກັບຄູສອນ ແລະ ຫ້ອງຮຽນປະຖົມສຶກສາປີທີ 1 ກ່ອນເປີດສົກຮຽນ.
- ຈັດສະພາບແວດລ້ອມຫ້ອງຮຽນ, ໃຫ້ມີມຸມຮຽນຮູ້ພາຍໃນ ແລະ ນອກຫ້ອງຮຽນເພື່ອຊ່ວຍໃຫ້ເດັກຂັ້ນປະຖົມສຶກສາປີທີ 1 ໄດ້ປັບຕົວໃນການຮຽນຮູ້ຈາກການປະຕິບັດຕົວຈິງ.
- ຈັດກິດຈະກຳເພື່ອໃຫ້ນັກຮຽນຂັ້ນປະຖົມສຶກສາປີທີ 1ກັບເດັກອະນຸບານສຶກສາປີທີ 3 ໄດ້ມີສ່ວນຮ່ວມໃນການປະຕິບັດລະບຽບ ແລະ ຂໍ້ຕົກລົງຮ່ວມກັນກ່ຽວກັບການປະຕິບັດຕົນໃນໂຮງຮຽນ ແລະ ຄອບຄົວ.

- ເຜີຍແຜ່ຂໍ້ມູນ-ຂ່າວສານຜົນການຮຽນ, ການເຄື່ອນໄຫວກິດຈະກຳ, ການພົວພັນທີ່ດີລະຫວ່າງເດັກກັບຄູ, ໂຮງຮຽນກັບ ຜູ້ປົກຄອງໃຫ້ສະມາຄົມພໍ່ແມ່ນັກຮຽນ ແລະ ອຳນາດການປົກຄອງໄດ້ຮັບຮູ້ ເພື່ອມີສ່ວນຮ່ວມໃນການສົ່ງເສີມ ແລະ ສະໜັບສະໜູນວຽກງານການສຶກສາຂັ້ນພື້ນຖານໃຫ້ມີຄຸນນະພາບ.

2.4 ຜູ້ປົກຄອງ ແລະ ອຳນາດການປົກຄອງທ້ອງຖິ່ນ

ເພື່ອບັນລຸຜົນສຳເລັດໃນການປະຕິບັດຫຼັກສູດຊັ້ນອະນຸບານສຶກສາຜູ້ປົກຄອງ ແລະ ອຳນາດການປົກຄອງທ້ອງຖິ່ນຄວນປະຕິບັດດັ່ງນີ້:

- ໃຫ້ການຮ່ວມມືກັບຄູສອນ ແລະ ໂຮງຮຽນເຊັ່ນ: ຊ່ວຍກະຕຸກຊຸກຍູ້ສົ່ງລູກໄປໂຮງຮຽນປົກກະຕິ,ຈັດກິດຈະກຳໃຫ້ເດັກສາມາດປັບຕົວເຂົ້າກັບຄູ, ໝູ່ເພື່ອນ ແລະ ສະພາບແວດລ້ອມຂອງໂຮງຮຽນ.
- ເຂົ້າໃຈຄວາມສຳຄັນ ແລະ ຄວາມຈຳເປັນຂອງການຮຽນຮູ້ຕາມພັດທະນາການຂອງເດັກໃນໄວອາຍຸ 3 ຫາ 6 ປີ, ຊ່ວຍເຫຼືອເດັກໃນການຮຽນ ແລະ ຕິດຕາມຜົນການຮຽນເປັນປົກກະຕິ.
- ເຂົ້າໃຈ ແລະ ຕອບສະໜອງຄວາມຕ້ອງການຂອງເດັກທາງດ້ານຄວາມຮັກ, ຄວາມເອົາໃຈໃສ່ເບິ່ງແຍງລ້ຽງດູ, ສຶກສາອົບຮົມ, ປົກປ້ອງ ແລະ ການພົວພັນເຊິ່ງກັນ ແລະ ກັນ.
- ເຂົ້າຮ່ວມການວາງແຜນ ແລະ ສະໜັບສະໜູນທາງດ້ານວັດຖຸ, ແຮງງານເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆຂອງໂຮງຮຽນ.

# ພາກທີ II. ສະມັດຖະພາບດ້ານການກຽມຄວາມພ້ອມເດັກອາຍຸ 3-6 ປີ

## I. ພັດທະນາການທາງດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ

ມາດຖານທີ 1: ມີສຸຂະພາບດີ, ຮ່າງກາຍຈະເລີນເຕີບໃຫຍ່ຕາມໄວອາຍຸ, ມີນິດໄສໃນການອະນາໄມ, ມີການປ້ອງກັນຄວາມປອດໄພໃນການຫຼິ້ນແລະຮຽນ

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ 1 (3-4 ປີ) | ອະນຸບານ 2 (4-5 ປີ) | ອະນຸບານ 3 (5-6 ປີ) |
| 1. ນ້ຳໜັກ ແລະ ລວງສູງຖືກຕ້ອງຕາມມາດຖານ | | ມີນ້ຳໜັກ ແລະ ລວງສູງຢູ່ໃນເກນມາດຖານອາຍຸເຊິ່ງກຳນົດໂດຍກະຊວງສາທາລະນະສຸກ | |
| 2. ຮັກສາສຸຂະພາບ, ອະນາໄມຕົນຕົວ ແລະ ຄວາມປອດໄພ | 1. ກິນອາຫານທີ່ມີປະໂຫຍດຖືກຕ້ອງຕາມເວລາ ແລະ ດື່ມນ້ຳສະອາດ | 1. ກິນອາຫານທີ່ມີປະໂຫຍດຖືກຕ້ອງຕາມເວລາ ແລະ ດື່ມນ້ຳສະອາດ | 1. ກິນອາຫານທີ່ມີປະໂຫຍດຖືກຕ້ອງຕາມເວລາ ແລະ ດື່ມນ້ຳ ສະອາດ |
| | 2. ລ້າງມືກ່ອນ ແລະ ຫຼັງກິນເຂົ້າ, ຫຼິ້ນເຄື່ອງຫຼິ້ນ ແລະ ໃຊ້ຫ້ອງນ້ຳ ຫຼື ວິດຖ່າຍ | 2. ລ້າງມືກ່ອນ ແລະ ຫຼັງກິນເຂົ້າຫຼິ້ນເຄື່ອງຫຼິ້ນ ແລະ ໃຊ້ຫ້ອງນ້ຳ ຫຼື ວິດຖ່າຍ | 2. ລ້າງມືກ່ອນ ແລະ ຫຼັງກິນເຂົ້າ, ຫຼິ້ນເຄື່ອງຫຼິ້ນ ແລະ ໃຊ້ຫ້ອງນ້ຳ ຫຼື ວິດຖ່າຍ |
| | 3. ບອກຄວາມຕ້ອງການເມື່ອຈະຂັບຖ່າຍ, ຂັບຖ່າຍເປັນເວລາ | 3. ບອກຄວາມຕ້ອງການເມື່ອຈະຂັບຖ່າຍ, ຂັບຖ່າຍເປັນເວລາ | 3. ບອກຄວາມຕ້ອງການເມື່ອຈະຂັບຖ່າຍ, ຂັບຖ່າຍເປັນເວລາ |
| | 4. ພັກຜ່ອນ ແລະ ນອນເປັນເວລາ | 4. ພັກຜ່ອນ ແລະ ນອນເປັນເວລາ | 4. ພັກຜ່ອນ ແລະ ນອນເປັນເວລາ |
| | 5. ລະມັດລະວັງ ເພື່ອໃຫ້ມີຄວາມປອດໄພຕໍ່ຕົນເອງ, ຜູ້ອື່ນໃນເວລາຫຼິ້ນ ແລະ ຮຽນ | 5. ລະມັດລະວັງເພື່ອໃຫ້ມີຄວາມປອດໄພຕໍ່ຕົນເອງ, ຜູ້ອື່ນໃນເວລາຫຼິ້ນ ແລະ ຮຽນ | 5. ລະມັດລະວັງ ເພື່ອໃຫ້ມີຄວາມປອດໄພຕໍ່ຕົນເອງ, ຜູ້ອື່ນໃນເວລາຫຼິ້ນ ແລະ ຮຽນ |

ມາດຖານທີ 2: ນຳໃຊ້ກ້າມຊີ້ນໃຫຍ່, ກ້າມຊີ້ນນ້ອຍໃຫ້ມີການເຄື່ອນໄຫວໄດ້ຢ່າງຄ່ອງແຄ້ວ ແລະ ປະສານສຳພັນກັນ

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ 1 (3-4 ປີ) | ອະນຸບານ 2 (4-5 ປີ) | ອະນຸບານ 3 (5-6 ປີ) |
| 1. ເຄື່ອນໄຫວຮ່າງກາຍ, ໃຊ້ຂາໄດ້ຢ່າງຄ່ອງແຄ້ວ ແລະ ຊົງຕົວໄດ້ດີ | 1. ຍ່າງຕາມແບບທີ່ກຳນົດ | 1. ຍ່າງຕໍ່ຕີນໄປທາງໜ້າຕາມແບບທີ່ກຳນົດ | 1. ຍ່າງຕໍ່ຕີນຖອຍຫຼັງຕາມແບບທີ່ກຳນົດ |
| | 2. ເຕັ້ນສອງຂາຂຶ້ນລົງຢູ່ກັບບ່ອນ | 2. ເຕັ້ນຂາດຽວຢູ່ກັບບ່ອນ | 2. ເຕັ້ນຂາດຽວໄປທາງໜ້າໄດ້ຢ່າງຕໍ່ເນື່ອງ |
| | 3. ຍ່າງຂຶ້ນຂັ້ນໄດສະຫຼັບຕີນ ໂດຍໃຊ້ມືຈັບຮາວຂັ້ນໄດ | 3. ຍ່າງຂຶ້ນ, ລົງຂັ້ນໄດສະຫຼັບຕີນ | 3. ຍ່າງຂຶ້ນ, ລົງຂັ້ນໄດສະຫຼັບຕີນຢ່າງຄ່ອງແຄ່ວ |
| | 4. ແລ່ນ ແລະ ຢຸດໄດ້ | 4. ແລ່ນ ແລະ ຢຸດໂດຍສາມາດຊົງຕົວ | 4. ແລ່ນຢ່າງວ່ອງໄວ ແລະ ຢຸດໂດຍບໍ່ໃຫ້ເສຍການຊົງຕົວ |
| 2. ພັດທະນາກ້າມຊີ້ນນ້ອຍ, ເຝິກກ້າມຊີ້ນມື ແລະ ເຝິກການຂຽນ | 1. ຂີດເສັ້ນຊື່, ເສັ້ນກົງ, ເສັ້ນເນີ້ງ, ວົງມົນ | 1. ຂີດເສັ້ນຕໍ່ຈຸດເປັນຮູບພາບ | 1. ຂີດ ຫຼື ແຕ້ມເປັນຮູບພາບ |
| | 2. ຂຽນພະຍັນຊະນະບາງຕົວຕາມຮອຍຈໍ້າ | 2. ຂຽນພະຍັນຊະນະ, ສະຫຼະເຄົ້າຕາມຮອຍຈໍ້າ | 2. ຂຽນເປັນຄຳ ແລະ ປະໂຫຍກສັ້ນໆ |

| | | | |
|---|---|---|---|
| 3. ພັດທະນາກ້າມຊີ້ນນ້ອຍ ແລະ ຄວາມສຳ ພັນລະຫວ່າງມືກັບສາຍຕາ | 1. ຈີກ ແລະ ຕັດເຈ້ຍໃຫ້ຂາດຈາກກັນ | 1. ຕັດເຈ້ຍຕາມເສັ້ນທີ່ກຳນົດໃຫ້ຂາດຈາກກັນ | 1. ຕັດເຈ້ຍຕາມເສັ້ນບໍ່ມີຮອຍບິດບ່ຽວໃຫ້ຂາດຈາກກັນ |
| | 2. ປັ້ນຕາມແບບໂດຍບໍ່ມີຮູບຮ່າງລະອຽດ | 2. ປັ້ນຕາມແບບໂດຍມີຮູບຮ່າງລະອຽດ | 2. ປັ້ນຕາມແບບໂດຍມີຮູບຮ່າງລະອຽດ, ຄວາມຄິດສ້າງສັນ ແລະ ແປກໃໝ່ |
| | 3. ຮ້ອຍວັດສະດຸທີ່ມີຮູຂະໜາດໃຫຍ່ | 3. ຮ້ອຍວັດສະດຸທີ່ມີຮູຂະໜາດກາງ | 3. ຮ້ອຍວັດສະດຸທີ່ມີຮູຂະໜາດນ້ອຍ |
| | 4. ໂຍນໝາກບານດ້ວຍສອງມືໄປທາງໜ້າຢ່າງບໍ່ມີເປົ້າໝາຍ | 4. ໂຍນໝາກບານດ້ວຍສອງມືໄປທາງໜ້າຢ່າງມີເປົ້າໝາຍໃນໄລຍະທາງສັ້ນ | 4. ໂຍນໝາກບານໄປທາງໜ້າຢ່າງມີເປົ້າໝາຍໃນໄລຍະທາງຍາວ |
| | 5. ຮັບໝາກບານທີ່ເຕັ້ນຂຶ້ນຈາກພື້ນດ້ວຍສອງມືໂດຍໃຊ້ແຂນສອງເບື້ອງ ແລະ ຕີນຕິວຊ່ວຍ | 5. ຮັບໝາກບານທີ່ເຕັ້ນຂຶ້ນຈາກພື້ນໄດ້ດ້ວຍສອງມືໂດຍໃຊ້ແຂນ ແລະ ໃຊ້ຕີນຕິວຊ່ວຍ | 5. ຮັບໝາກບານທີ່ເຕັ້ນຂຶ້ນຈາກພື້ນດ້ວຍສອງມືໂດຍບໍ່ໃຊ້ຕີນຕິວຊ່ວຍ |
| | 6. ເຄື່ອນໄຫວມື ແລະ ແຂນເຮັດທ່າທາງຕ່າງ ໆຕາມແບບທີ່ກຳນົດ | 6. ເຄື່ອນໄຫວມື ແລະ ແຂນເຮັດທ່າທາງຕ່າງໆ ຕາມແບບທີ່ກຳນົດ | 6. ເຄື່ອນໄຫວມື ແລະ ແຂນເຮັດທ່າທາງຕ່າງໆ ຕາມແບບທີ່ກຳນົດ |

ມາດຖານທີ 3: ຊ່ວຍເຫຼືອຕົນເອງໄດ້ເໝາະສົມກັບໄວອາຍຸ

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ 1 (3-4 ປີ) | ອະນຸບານ 2 (4-5 ປີ) | ອະນຸບານ 3 (5-6 ປີ) |
| 1. ປະຕິບັດກິດຈະກຳປະຈຳວັນໄດ້ດ້ວຍຕົນເອງ | 1. ເລືອກເຄື່ອງນຸ່ງຫົ່ມ, ນຸ່ງເຄື່ອງ ແລະ ແຕ່ງຕົວດ້ວຍຕົນເອງໂດຍມີຜູ້ຊ່ວຍແນະນຳ | 1. ເລືອກເຄື່ອງນຸ່ງຫົ່ມ, ນຸ່ງເຄື່ອງ ແລະ ແຕ່ງຕົວດ້ວຍຕົນເອງ ໂດຍມີຜູ້ຊ່ວຍແນະນຳບາງຄັ້ງ | 1. ເລືອກເຄື່ອງນຸ່ງຫົ່ມ, ນຸ່ງເຄື່ອງ ແລະ ແຕ່ງຕົວໄດ້ດ້ວຍຕົນເອງ |
| | 2. ກິນອາຫານແລະດື່ມນ້ຳໄດ້ດ້ວຍຕົນເອງໂດຍມີຜູ້ຊ່ວຍແນະນຳ | 2.ກິນອາຫານແລະດື່ມນ້ຳໄດ້ດ້ວຍຕົນເອງໂດຍມີຜູ້ຊ່ວຍແນະນຳບາງຄັ້ງ | 2. ກິນອາຫານ ແລະ ດື່ມນ້ຳໄດ້ດ້ວຍຕົນເອງ |
| | 3. ໃຊ້ຫ້ອງນ້ຳ, ຫ້ອງຖ່າຍໄດ້ ໂດຍມີຜູ້ຊ່ວຍແນະນຳ | 3. ໃຊ້ຫ້ອງນ້ຳ,ຫ້ອງຖ່າຍໄດ້ດ້ວຍຕົນເອງໂດຍມີຜູ້ຊ່ວຍແນະນຳບາງຄັ້ງ | 3. ໃຊ້ຫ້ອງນ້ຳ, ຫ້ອງຖ່າຍໄດ້ດ້ວຍຕົນເອງ |

## II. ພັດທະນາການທາງດ້ານອາລົມ -ຈິດໃຈ

ມາດຖານທີ 1: ມີອາລົມ,ຈິດໃຈທີ່ດີ ແລະ ມີຄວາມສຸກໃນການຫຼິ້ນ ແລະ ຮຽນ

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ 1 (3-4 ປີ) | ອະນຸບານ 2 (4-5 ປີ) | ອະນຸບານ 3 (5-6 ປີ) |
| 1. ມີອາລົມ,ຈິດໃຈທີ່ດີໃນການຫຼິ້ນ ແລະ ຮຽນ | ສະແດງອອກທາງອາລົມເບີກບານມ່ວນຊື່ນຢ່າງເໝາະສົມກັບໄວອາຍຸ ແລະ ສະຖານະການ | ສະແດງອອກທາງອາລົມເບີກບານມ່ວນຊື່ນຢ່າງເໝາະສົມກັບໄວອາຍຸ ແລະ ສະຖານະການ | ສະແດງອອກທາງອາລົມເບີກບານມ່ວນຊື່ນຢ່າງເໝາະສົມກັບໄວອາຍຸ ແລະ ສະຖານະການ |
| 2. ມີຄວາມຮູ້ສຶກທີ່ດີຕໍ່ຕົນເອງ ແລະ ຜູ້ອື່ນ | 1. ໝັ້ນໃຈໃນຕົນເອງ ແລະ ກ້າສະແດງອອກໃນການຫຼິ້ນ ແລະຮຽນ | 1. ໝັ້ນໃຈໃນຕົນເອງ ແລະ ກ້າສະແດງອອກໃນການຫຼິ້ນ ແລະ ຮຽນ | 1. ໝັ້ນໃຈໃນຕົນເອງ, ກ້າສະແດງອອກໃນການຫຼິ້ນ ແລະຮຽນ |

| | | | |
|---|---|---|---|
| | 2. ພໍໃຈໃນສິ່ງທີ່ຕົນເອງເຮັດໄດ້,ຊົມເຊີຍຄວາມສາມາດຂອງຕົນເອງ ແລະ ຜູ້ອື່ນ | 2. ພໍໃຈໃນສິ່ງທີ່ຕົນເອງເຮັດໄດ້,ຊົມເຊີຍຄວາມສາມາດຂອງຕົນເອງ ແລະ ຜູ້ອື່ນ | 2. ພໍໃຈໃນສິ່ງທີ່ຕົນເອງເຮັດໄດ້,ຊົມເຊີຍຄວາມສາມາດຂອງຕົນເອງ ແລະ ຜູ້ອື່ນ |

**ມາດຖານທີ 2: ມີມາລະຍາດ, ມີລະບຽບວິໄນ ແລະ ຄວາມຮັບຜິດຊອບ, ມີຄວາມສັດຊື່ ແລະ ຈິດໃຈດີງາມ**

| **ເນື້ອໃນ** | **ຕົວຊີ້ບອກ** | | |
|---|---|---|---|
| | **ອະນຸບານ 1 (3-4 ປີ)** | **ອະນຸບານ 2 (4-5 ປີ)** | **ອະນຸບານ 3 (5-6 ປີ)** |
| 1. ມີມາລະຍາດທີ່ດີ | ມີມາລະຍາດໃນການຟັງ, ເວົ້າ, ນັ່ງ, ຍ່າງ ແລະ ກິນ | ມີມາລະຍາດໃນການຟັງ, ເວົ້າ, ນັ່ງ, ຍ່າງ ແລະ ກິນ | ມີມາລະຍາດໃນການຟັງ, ເວົ້າ, ນັ່ງ, ຍ່າງ ແລະ ກິນ |
| 2. ມີລະບຽບວິໄນ ແລະ ຄວາມຮັບຜິດຊອບ | 1. ເກັບມ້ຽນເຄື່ອງຫຼິ້ນ, ເຄື່ອງໃຊ້ເຂົ້າໄວ້ໃນບ່ອນມ້ຽນໂດຍມີຜູ້ຊ່ວຍແນະນຳ | 1. ເກັບມ້ຽນເຄື່ອງຫຼິ້ນ, ເຄື່ອງໃຊ້ເຂົ້າໄວ້ໃນບ່ອນມ້ຽນໂດຍມີຜູ້ຊ່ວຍແນະນຳບາງຄັ້ງ | 1. ເກັບມ້ຽນເຄື່ອງຫຼິ້ນ, ເຄື່ອງໃຊ້ເຂົ້າໄວ້ໃນບ່ອນມ້ຽນດ້ວຍຕົນເອງ |
| | 2. ອົດທົນປະຕິບັດກິດຈະກຳທີ່ໄດ້ຮັບມອບໝາຍໂດຍມີຜູ້ຊ່ວຍແນະນຳ | 2. ອົດທົນປະຕິບັດກິດຈະກຳທີ່ໄດ້ຮັບມອບໝາຍສຳເລັດ ໂດຍມີຜູ້ຊ່ວຍແນະນຳບາງຄັ້ງ | 2. ອົດທົນປະຕິບັດກິດຈະກຳທີ່ໄດ້ຮັບມອບໝາຍໃຫ້ສຳເລັດດ້ວຍຕົນເອງ |
| 3. ມີຄວາມສັດຊື່ ແລະ ຍອມຮັບຄວາມຜິດພາດຂອງຕົນເອງ ແລະ ຜູ້ອື່ນ | 1. ຮູ້ຈັກເຄື່ອງໃຊ້ຂອງຕົນເອງ | 1. ຮູ້ຈັກເຄື່ອງໃຊ້ຂອງຕົນເອງ ແລະ ເຄື່ອງຂອງຜູ້ອື່ນ | 1. ຮູ້ຈັກເຄື່ອງໃຊ້ຂອງຕົນເອງ ແລະ ເຄື່ອງຂອງຜູ້ອື່ນ |
| | 2. ຂໍໂທດເມື່ອຕົນເອງເຮັດບໍ່ຖືກຕ້ອງ ແລະ ໃຫ້ອະໄພຜູ້ອື່ນທີ່ເຮັດຜິດ | 2. ຂໍໂທດເມື່ອຕົນເອງເຮັດບໍ່ຖືກຕ້ອງ ແລະ ໃຫ້ອະໄພຜູ້ອື່ນທີ່ເຮັດຜິດ | 2. ຂໍໂທດເມື່ອຕົນເອງເຮັດບໍ່ຖືກຕ້ອງ ແລະ ໃຫ້ອະໄພຜູ້ອື່ນທີ່ເຮັດຜິດ |

| | | | |
|---|---|---|---|
| 4. ຄວາມຮັກ,ນັບຖື, ເມດຕາກະລຸນາ ແລະ ຊ່ວຍເຫຼືອ ແບ່ງປັນຜູ້ອື່ນ | 1. ສະແດງຄວາມຮັກແພງນັບຖື ຕໍ່ຜູ້ອາວຸໂສ, ພໍ່ແມ່, ອ້າຍ, ເອື້ອຍ, ນ້ອງ ແລະ ໝູ່ເພື່ອນ | 1. ສະແດງຄວາມຮັກແພງນັບຖືຕໍ່ຜູ້ ອາວຸໂສ, ພໍ່ແມ່, ອ້າຍ, ເອື້ອຍ, ນ້ອງ ແລະ ໝູ່ເພື່ອນ | 1. ສະແດງຄວາມຮັກແພງນັບຖື ຕໍ່ຜູ້ອາວຸໂສ, ພໍ່ແມ່, ອ້າຍ, ເອື້ອຍ, ນ້ອງ ແລະ ໝູ່ເພື່ອນ |
| | 2. ແບ່ງປັນສິ່ງຂອງ ແລະ ໃຫ້ ຄວາມຊ່ວຍເຫຼືອຜູ້ອື່ນ | 2. ແບ່ງປັນສິ່ງຂອງ ແລະ ໃຫ້ຄວາມ ຊ່ວຍເຫຼືອຜູ້ອື່ນ | 2. ແບ່ງປັນສິ່ງຂອງ ແລະ ໃຫ້ຄວາມ ຊ່ວຍເຫຼືອຜູ້ອື່ນ |
| 5. ມີຄວາມຮັກແພງ ແລະ ຊ່ວຍລ້ຽງດູ ສັດລ້ຽງ | ສະແດງຄວາມຮັກແພງ ແລະ ຊ່ວຍລ້ຽງດູສັດລ້ຽງ | ສະແດງຄວາມຮັກແພງ ແລະ ຊ່ວຍ ລ້ຽງດູສັດລ້ຽງ | ສະແດງຄວາມຮັກແພງ ແລະ ຊ່ວຍລ້ຽງດູສັດລ້ຽງ |

**ມາດຖານທີ 3: ມີຄວາມສົນໃຈ, ພໍໃຈ, ມ່ວນຊື່ນ, ກ້າຫານສະແດງອອກທາງສິລະປະກຳ, ສິລະປະດົນຕີ, ການຫຼິ້ນ ແລະ ການອອກກຳລັງກາຍ**

| **ເນື້ອໃນ** | **ຕົວຊີ້ບອກ** | | |
|---|---|---|---|
| | **ອະນຸບານ 1 (3-4 ປີ)** | **ອະນຸບານ 2 (4-5 ປີ)** | **ອະນຸບານ 3 (5-6 ປີ)** |
| 1. ສົນໃຈ, ພໍໃຈ, ມ່ວນຊື່ນກັບສິລະ ປະກຳ, ສິລະປະ ດົນຕີ, ການຫຼິ້ນ ແລະ ການອອກກຳລັງກາຍ | ມີຄວາມສົນໃຈ, ພໍໃຈ, ມ່ວນຊື່ນກັບ ສິລະປະກຳ, ສິລະປະດົນຕີ, ການຫຼິ້ນ ແລະ ການອອກກຳລັງກາຍ | ມີຄວາມສົນໃຈ, ພໍໃຈ, ມ່ວນຊື່ນກັບສິລະ ປະກຳ, ສິລະປະດົນຕີ, ການຫຼິ້ນ ແລະ ການອອກກຳລັງກາຍ | ມີຄວາມສົນໃຈ, ພໍໃຈ, ມ່ວນຊື່ນກັບ ສິລະປະກຳ, ສິລະປະດົນຕີ, ການຫຼິ້ນ ແລະ ການອອກກຳລັງກາຍ |
| 2. ກ້າຫານ ແລະ ສະ ແດງອອກທາງດ້ານ ສິລະປະດົນຕີ | ສະແດງການເຄື່ອນໄຫວປະກອບ ເພງ, ຈັງຫວະດົນຕີຕາມຄຳສັ່ງ ແລະ ຈິນຕະນາການ | ເຄື່ອນໄຫວປະກອບເພງ, ຈັງຫວະ ດົນຕີ ຕາມຄຳສັ່ງ ແລະ ຈິນຕະນາການ | ເຄື່ອນໄຫວປະກອບເພງ, ຈັງຫວະ ດົນຕີຕາມຄຳສັ່ງ ແລະ ຈິນຕະນາການ |

| | | | |
|---|---|---|---|
| 3. ກ້າຫານ ແລະ ສະແດງຜົນງານທາງດ້ານສິລະປະກຳ | ສະແດງຜົນງານການແຕ້ມ, ປັ້ນ, ຮ້ອຍ, ຕັດ, ຕິດ ຕາມແບບ ແລະ ຈິນຕະນາການ | ສະແດງຜົນງານການແຕ້ມ, ປັ້ນ, ຮ້ອຍ, ຕັດ, ຕິດ ຕາມແບບ ແລະ ຈິນຕະນາການ | ສະແດງຜົນງານການແຕ້ມ, ປັ້ນ, ຮ້ອຍ, ຕັດ, ຕິດຕາມແບບ ແລະ ຈິນຕະນາການ |

## III. ພັດທະນາການທາງດ້ານສັງຄົມ

**ມາດຖານທີ 1: ຮັກທຳມະຊາດ, ສິ່ງແວດລ້ອມ, ວັດທະນາທຳອັນດີງາມຂອງຊາດ ແລະ ທ້ອງຖິ່ນ**

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ 1 (3-4 ປີ) | ອະນຸບານ 2 (4-5 ປີ) | ອະນຸບານ 3 (5-6 ປີ) |
| 1. ປົກປັກຮັກສາທຳມະຊາດ, ສິ່ງແວດລ້ອມ ແລະ ປະຢັດສິ່ງຂອງເຄື່ອງໃຊ້ | 1. ສະແດງຄວາມສົນໃຈໃນການບົວລະບັດຮັກສາທຳມະຊາດ ແລະ ສິ່ງແວດລ້ອມ | 1. ສະແດງຄວາມສົນໃຈໃນການບົວລະບັດຮັກສາທຳມະຊາດ ແລະ ສິ່ງແວດລ້ອມ | 1. ສະແດງຄວາມສົນໃຈໃນການບົວລະບັດຮັກສາທຳມະຊາດ ແລະ ສິ່ງແວດລ້ອມ |
| | 2. ຖິ້ມຂີ້ເຫຍື້ອຖືກບ່ອນ | 2. ຖິ້ມຂີ້ເຫຍື້ອຖືກບ່ອນ | 2. ຖິ້ມຂີ້ເຫຍື້ອຖືກບ່ອນ |
| | 3. ຊ່ວຍບົວລະບັດຮັກສາຕົ້ນໄມ້ ແລະ ສະຖານທີ່ສຳຄັນ | 3. ຊ່ວຍບົວລະບັດຮັກສາຕົ້ນໄມ້ ແລະ ສະຖານທີ່ສຳຄັນ | 3. ຊ່ວຍບົວລະບັດຮັກສາຕົ້ນໄມ້ ແລະ ສະຖານທີ່ສຳຄັນ |
| | 4. ນຳໃຊ້ສິ່ງຂອງເຄື່ອງໃຊ້, ນ້ຳ ແລະ ໄຟຢ່າງປະຢັດ ໂດຍມີຜູ້ຊ່ວຍແນະນຳ | 4. ນຳໃຊ້ສິ່ງຂອງເຄື່ອງໃຊ້, ນ້ຳ ແລະ ໄຟຢ່າງປະຢັດໂດຍມີຜູ້ຊ່ວຍແນະນຳໃນບາງຄັ້ງ | 4. ນຳໃຊ້ສິ່ງຂອງເຄື່ອງໃຊ້, ນ້ຳ ແລະ ໄຟຢ່າງປະຢັດໄດ້ດ້ວຍຕົນເອງ |

| | | | |
|---|---|---|---|
| 2. ມີສຳມາຄາລະວະ, ມາລະຍາດຕາມວັດທະນາທຳ ແລະ ຮີດຄອງປະເພນີລາວ | 1. ສະແດງຄວາມເຄົາລົບນັບຖືຜູ້ໃຫຍ່, ຜູ້ອາວຸໂສ ແລະ ພະສົງໂດຍມີຜູ້ຊ່ວຍແນະນຳ | 1. ສະແດງຄວາມເຄົາລົບນັບຖືຜູ້ໃຫຍ່ ຜູ້ອາວຸໂສ ແລະ ພະສົງ ໂດຍມີຜູ້ຊ່ວຍແນະນຳໃນບາງຄັ້ງ | 1. ສະແດງຄວາມເຄົາລົບນັບຖືຜູ້ໃຫຍ່ ຜູ້ອາວຸໂສ, ພະສົງໄດ້ດ້ວຍຕົນເອງ |
| | 2. ປະຕິບັດຕົນໃນການນຸ່ງຖື, ເຄື່ອນໄຫວໄປມາໄດ້ເໝາະສົມຕາມກາລະເທສະ ໂດຍມີຜູ້ຊ່ວຍແນະນຳ | 2. ປະຕິບັດຕົນໃນການນຸ່ງຖື, ເຄື່ອນໄຫວໄປມາໄດ້ເໝາະສົມຕາມກາລະເທສະ ໂດຍມີຜູ້ຊ່ວຍແນະນຳໃນບາງຄັ້ງ | 2. ປະຕິບັດຕົນໃນການນຸ່ງຖື, ເຄື່ອນໄຫວໄປມາໄດ້ເໝາະສົມຕາມກາລະເທສະໄດ້ດ້ວຍຕົນເອງ |
| | 3. ສະແດງຄວາມເຄົາລົບນັບຖືສະຖານທີ່ສຳຄັນທາງປະຫວັດສາດ, ວັດທະນາທຳຂອງຊາດ ແລະ ທ້ອງຖິ່ນ ໂດຍມີຜູ້ຊ່ວຍແນະນຳ | 3. ສະແດງຄວາມເຄົາລົບນັບຖືສະຖານທີ່ສຳຄັນທາງປະຫວັດສາດ, ວັດທະນາທຳຂອງຊາດ ແລະ ທ້ອງຖິ່ນ ໂດຍມີຜູ້ຊ່ວຍແນະນຳໃນບາງຄັ້ງ | 3. ສະແດງຄວາມເຄົາລົບນັບຖືສະຖານທີ່ສຳຄັນທາງປະຫວັດສາດ, ວັດທະນາທຳຂອງຊາດ ແລະ ທ້ອງຖິ່ນໄດ້ດ້ວຍຕົນເອງ |

**ມາດຖານທີ 2: ປະຕິບັດຕົນເປັນສະມາຊິກທີ່ດີຂອງຄອບຄົວ, ໂຮງຮຽນ, ສັງຄົມ ແລະ ຢູ່ຮ່ວມກັບຜູ້ອື່ນໄດ້ຢ່າງມີຄວາມສຸກ**

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ 1 (3-4 ປີ) | ອະນຸບານ 2 (4-5 ປີ) | ອະນຸບານ 3 (5-6 ປີ) |
| 1. ຫຼິ້ນ ແລະ ເຮັດວຽກຮ່ວມກັບຜູ້ອື່ນໄດ້ | 1. ລໍຄອຍຕາມລຳດັບກ່ອນ, ຫຼັງ ແລະ ຍອມຮັບຄຳຄິດເຫັນຂອງຜູ້ອື່ນ | 1. ລໍຄອຍຕາມລຳດັບກ່ອນ, ຫຼັງ ແລະ ຍອມຮັບຄຳຄິດເຫັນຂອງຜູ້ອື່ນ | 1. ລໍຄອຍຕາມລຳດັບກ່ອນ, ຫຼັງ ແລະ ຍອມຮັບຄຳຄິດເຫັນຂອງຜູ້ອື່ນ |
| | 2. ຫຼິ້ນ ແລະ ຮຽນຮ່ວມກັບເດັກຄົນອື່ນເປັນກຸ່ມ | 2. ຫຼິ້ນ ແລະ ຮຽນຮ່ວມກັບເດັກຄົນອື່ນເປັນກຸ່ມ | 2. ຫຼິ້ນ ແລະ ຮຽນຮ່ວມກັບເດັກຄົນອື່ນເປັນກຸ່ມ |

| | | | |
|---|---|---|---|
| 2. ປະຕິບັດຕົນໃນການເປັນສະມາຊິກທີ່ດີຂອງໂຮງຮຽນ ແລະ ສັງຄົມ | 1. ປະຕິບັດຕົນຕາມຂໍ້ຕົກລົງ ໃນການເຄື່ອນໄຫວກິດຈະກຳການຫຼິ້ນ ແລະ ຮຽນໄດ້ ໂດຍມີຜູ້ຊ່ວຍແນະນຳ | 1. ປະຕິບັດຕົນຕາມຂໍ້ຕົກລົງໃນການເຄື່ອນໄຫວກິດຈະກຳການຫຼິ້ນ ແລະ ຮຽນໄດ້ ໂດຍມີຜູ້ຊ່ວຍແນະນຳໃນບາງຄັ້ງ | 1. ປະຕິບັດຕົນຕາມຂໍ້ຕົກລົງໃນການເຄື່ອນໄຫວກິດຈະກຳການຫຼິ້ນ ແລະ ຮຽນໄດ້ດ້ວຍຕົນເອງ |
| | 2. ປະຕິບັດຕົນເປັນຜູ້ນຳພາໝູ່ ແລະ ຜູ້ເຮັດຕາມໝູ່ | 2. ປະຕິບັດຕົນເປັນຜູ້ນຳພາໝູ່ ແລະ ຜູ້ເຮັດຕາມໝູ່ | 2. ປະຕິບັດຕົນເປັນຜູ້ນຳພາໝູ່ ແລະ ຜູ້ເຮັດຕາມໝູ່ |

## IV. ພັດທະນາການທາງດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ

**ມາດຖານທີ 1: ມີຄວາມສາມາດໃນການຄິດ ແລະ ການແກ້ໄຂບັນຫາໄດ້ເໝາະສົມກັບໄວອາຍຸ**

| **ເນື້ອໃນ** | **ຕົວຊີ້ບອກ** | | |
|---|---|---|---|
| | **ອະນຸບານ 1 (3-4 ປີ)** | **ອະນຸບານ 2 (4-5 ປີ)** | **ອະນຸບານ 3 (5-6) ປີ** |
| **ເນື້ອໃນທີ 1: ຈຳນວນ** | | | |
| **1.** ເຂົ້າໃຈການສະແດງຈຳນວນ | 1. ນັບປາກເປົ່າຈາກ 1 ເຖິງ 10 | 1. ນັບປາກເປົ່າຈາກ 1 ເຖິງ 10ຕາມລຳດັບບໍ່ໃຫ້ຂ້າມ | 1. ນັບປາກເປົ່າຈາກ 1 ເຖິງ 20 |
| 2. ການນຳໃຊ້ຈຳນວນບອກສິ່ງທີ່ໄດ້ຈາກການນັບ ແລະ ຮູ້ຄ່າຈຳນວນ. | 1. ບອກຈຳນວນຂອງສິ່ງຕ່າງໆບໍ່ເກີນ 5 ຢ່າງໂດຍການນັບແລະອ່ານຕົວເລກ<br>2. ສະແດງສິ່ງຕ່າງໆ ຕາມຈຳນວນທີ່ກຳນົດໃຫ້ແຕ່ 1 ເຖິງ 5 | 1. ບອກຈຳນວນຂອງສິ່ງຕ່າງໆບໍ່ເກີນ 10 ຢ່າງໂດຍການນັບ, ອ່ານຕົວເລກ<br>2. ສະແດງສິ່ງຕ່າງໆ ຕາມຈຳນວນທີ່ກຳນົດໃຫ້ແຕ່ 1 ເຖິງ 10 | 1. ນັບຖອຍຫຼັງປາກເປົ່າຈາກ 10 ເຖິງ 1<br>2. ບອກຈຳນວນຂອງສິ່ງຕ່າງໆບໍ່ເກີນ 20 ຢ່າງໂດຍການນັບ<br>3. ສະແດງສິ່ງຕ່າງໆ ຕາມຈຳນວນທີ່ກຳນົດໃຫ້ແຕ່ 1 ເຖິງ 20 |

| | | | |
|---|---|---|---|
| 2.1 ການອ່ານຕົວເລກອາຣັບ ແລະ ຕົວເລກລາວ | ອ່ານຕົວເລກອາຣັບ 1 ເຖິງ 5 | ອ່ານຕົວເລກອາຣັບ 1 ເຖິງ 10 | 1. ອ່ານຕົວເລກອາຣັບແຕ່ 1 ເຖິງ 20<br>2. ອ່ານຕົວເລກລາວແຕ່ 1 ເຖິງ 9 |
| 2.2 ການຂຽນຕົວເລກອາຣັບ ແລະ ສະແດງຈຳນວນ | 1. ລະບຸຕົວເລກອາຣັບສະແດງຈຳນວນຂອງສິ່ງຕ່າງໆຕັ້ງແຕ່ 1 ເຖິງ 5<br>2. ຂຽນຕົວເລກອາຣັບແຕ່ 1 ເຖິງ 9 ຕາມຮອຍຈ້ຳ | 1. ລະບຸຕົວເລກອາຣັບສະແດງຈຳນວນຂອງສິ່ງຕ່າງໆຕັ້ງແຕ່ 1 ເຖິງ 10<br>2. ຂຽນຕົວເລກອາຣັບແຕ່ 1 ເຖິງ 9 | 1. ລະບຸຕົວເລກອາຣັບສະແດງຈຳນວນຂອງສິ່ງຕ່າງໆຕັ້ງແຕ່ 1 ເຖິງ 10<br>2. ຂຽນຕົວເລກອາຣັບ ແລະ ຕົວເລກລາວແຕ່ 1 ເຖິງ 9 |
| 2.3 ການປຽບທຽບຈຳນວນ | ປຽບທຽບຈຳນວນຂອງສິ່ງຕ່າງໆສອງກຸ່ມໂດຍແຕ່ລະກຸ່ມມີຈຳນວນບໍ່ເກີນ 5 ວ່າມີຈຳນວນເທົ່າກັນ ຫຼື ບໍ່ເທົ່າກັນ | ປຽບທຽບຈຳນວນຂອງສິ່ງຕ່າງໆສອງກຸ່ມໂດຍແຕ່ລະກຸ່ມມີຈຳນວນບໍ່ເກີນ 10 ວ່າມີຈຳນວນເທົ່າກັນ ຫຼື ບໍ່ເທົ່າກັນ, ກຸ່ມໃດມີຈຳນວນຫຼາຍກວ່າຫຼື ໜ້ອຍກວ່າ | ປຽບທຽບຈຳນວນຂອງສິ່ງຕ່າງໆສອງກຸ່ມໂດຍແຕ່ລະກຸ່ມມີຈຳນວນບໍ່ເກີນ 20 ວ່າມີຈຳນວນເທົ່າກັນ ຫຼື ບໍ່ເທົ່າກັນ, ກຸ່ມໃດມີຈຳນວນຫຼາຍກວ່າ ຫຼື ໜ້ອຍກວ່າ |
| 2.4 ການລຽງລຳດັບຈຳນວນ | | 1. ບອກອັນດັບທີຂອງສິ່ງຕ່າງໆບໍ່ເກີນ 3 ຢ່າງ<br>2. ລະບຸສິ່ງທີ່ຢູ່ໃນອັນດັບທີ່ກຳນົດໃຫ້ | 1.ບອກອັນດັບທີຂອງສິ່ງຕ່າງໆບໍ່ເກີນ3ຢ່າງ<br>2. ລະບຸສິ່ງທີ່ຢູ່ໃນອັນດັບທີ່ກຳນົດໃຫ້ |
| 3. ການຮ່ວມກຸ່ມ<br>- ຄວາມໝາຍຂອງການຮ່ວມກຸ່ມ<br>- ການຮ່ວມສິ່ງຕ່າງ ໆສອງກຸ່ມ | ບອກໄດ້ວ່າເມື່ອນຳສິ່ງຕ່າງ ໆສອງກຸ່ມມາຮ່ວມກັນຈະມີຈຳນວນຫຼາຍຂຶ້ນ | ບອກຈຳນວນທັງໝົດຈາກການຮ່ວມສິ່ງຕ່າງໆສອງກຸ່ມທີ່ມີຜົນລວມບໍ່ເກີນ 5 | 1. ບອກຈຳນວນທັງໝົດຈາກການຮ່ວມສິ່ງຕ່າງໆສອງກຸ່ມທີ່ມີຜົນລວມບໍ່ເກີນ10<br>2. ບອກຈຳນວນຂອງສິ່ງຕ່າງໆສອງກຸ່ມທີ່ມີຜົນລວມບໍ່ເກີນ 10 |

| | | | |
|---|---|---|---|
| 4. ການແຍກກຸ່ມ<br>- ຄວາມໝາຍຂອງການແຍກ<br>- ການແຍກກຸ່ມຍ່ອຍອອກຈາກກຸ່ມໃຫຍ່ | ບອກໄດ້ວ່າເມື່ອນຳສິ່ງຕ່າງໆອອກຈາກກຸ່ມໃຫຍ່ຈຳນວນຂອງສິ່ງຕ່າງໆໃນກຸ່ມຈະໜ້ອຍລົງ | ບອກຈຳນວນທີ່ເຫຼືອເມື່ອແຍກກຸ່ມຍ່ອຍອອກຈາກກຸ່ມໃຫຍ່ມີຈຳນວນບໍ່ເກີນ 5 | ບອກຈຳນວນທີ່ເຫຼືອເມື່ອແຍກກຸ່ມຍ່ອຍອອກຈາກກຸ່ມໃຫຍ່ມີຈຳນວນບໍ່ເກີນ 10 |
| **ເນື້ອໃນທີ 2: ການວັດແທກ** | | | |
| **ເຂົ້າໃຈພື້ນຖານກ່ຽວກັບການວັດແທກຄວາມຍາວ, ນ້ຳໜັກ, ປະລິມານ, ເງິນ ແລະ ເວລາ**<br>**1. ການວັດແທກຄວາມຍາວ**<br>- ການປຽບທຽບຄວາມຍາວ<br>- ການລຽນລຳດັບຄວາມຍາວ<br>- ການວັດແທກຄວາມຍາວໂດຍໃຊ້ເຄື່ອງມື ແລະ ຫົວໜ່ວຍວັດແທກທີ່ບໍ່ເປັນມາດຖານ | ປຽບທຽບຄວາມຍາວ, ຄວາມສູງຂອງສິ່ງຕ່າງໆໂດຍໃຊ້ຄຳວ່າ: ສັ້ນກວ່າ, ຍາວກ່ວາ, ສູງກ່ວາ, ຕ່ຳກວ່າ, ຍາວເທົ່າກັນ ຫຼື ສູງເທົ່າກັນ | ລຽນລຳດັບຄວາມຍາວແລະຄວາມສູງຂອງສິ່ງຕ່າງໆບໍ່ເກີນ 3 ຢ່າງ ໂດຍໃຊ້ຄຳສັບວ່າ: ສັ້ນກວ່າ, ຍາວກວ່າ, ສູງກວ່າ, ຕ່ຳກວ່າ, ຍາວເທົ່າກັນ ຫຼື ສູງເທົ່າກັນ | ວັດແທກ,ບອກຄວາມຍາວແລະຄວາມສູງຂອງສິ່ງຕ່າງໆທີ່ກຳນົດໃຫ້ໂດຍໃຊ້ເຄື່ອງມື ແລະ ຫົວໜ່ວຍທີ່ບໍ່ເປັນມາດຖານ |
| **2. ການວັດແທກນ້ຳໜັກ**<br>- ການປຽບທຽບນ້ຳໜັກ<br>- ການລຽນລຳດັບນ້ຳໜັກ<br>- ການຊັ່ງໂດຍໃຊ້ເຄື່ອງມືແລະຫົວໜ່ວຍການວັດແທກທີ່ບໍ່ເປັນມາດຖານ | ປຽບທຽບນ້ຳໜັກຂອງສິ່ງຕ່າງໆໂດຍໃຊ້ຄຳວ່າ: ໜັກກວ່າ,ເບົາກວ່າ, ໜັກເທົ່າກັນ | ລຽນລຳດັບນ້ຳໜັກຂອງສິ່ງຕ່າງໆບໍ່ເກີນ 3 ຢ່າງ ໂດຍໃຊ້ຄຳວ່າ: ໜັກກວ່າ, ເບົາກວ່າ, ໜັກເທົ່າກັນ | ຊັ່ງແລະບອກນ້ຳໜັກຂອງສິ່ງຕ່າງໆທີ່ກຳນົດໃຫ້ໂດຍໃຊ້ເຄື່ອງມື ແລະ ຫົວໜ່ວຍທີ່ບໍ່ເປັນມາດຖານ |

| | | | |
|---|---|---|---|
| **3. ການວັດແທກປະລິມານ**<br>- ການປຽບທຽບປະລິມານ<br>- ການລຽນລຳດັບປະລິມານ<br>- ການຜອງໂດຍໃຊ້ເຄື່ອງມື, ຫົວໜ່ວຍທີ່ບໍ່ເປັນມາດຖານ | ປຽບທຽບປະລິມານຂອງສິ່ງຕ່າງໆ ໂດຍໃຊ້ຄຳວ່າ: ປະລິມານຫຼາຍກວ່າ, ປະລິມານໜ້ອຍກວ່າ, ປະລິມານເທົ່າກັນ | ລຽນລຳດັບປະລິມານຂອງສິ່ງຕ່າງໆບໍ່ເກີນ 3 ຢ່າງ ໂດຍໃຊ້ຄຳວ່າ: ປະລິມານຫຼາຍກວ່າ, ປະລິມານໜ້ອຍກວ່າ, ປະລິມານເທົ່າກັນ | ຜອງແລະບອກປະລິມານຂອງສິ່ງຕ່າງໆທີ່ກຳນົດໃຫ້ໂດຍໃຊ້ເຄື່ອງມື ແລະ ຫົວໜ່ວຍທີ່ບໍ່ເປັນມາດຖານ |
| **4. ເງິນກີບ:**<br>ຊະນິດ ແລະ ຄ່າຂອງເງິນກີບ | | | ບອກຊະນິດ ແລະ ຄ່າຂອງເງິນກີບໃບ500 ກີບ,1000 ກີບ, 2000 ກີບໃນການແລກປ່ຽນສິນຄ້າ |
| **5. ເວລາ**:<br>1. ຊ່ວງເວລາໃນແຕ່ລະວັນ | ບອກກິດຈະກຳ ຫຼື ເຫດການໃນຊີວິດປະຈຳວັນທີ່ເກີດຂຶ້ນໃນໄລຍະເວລາກາງເວັນ ແລະ ກາງຄືນ | 1. ບອກກິດຈະກຳ ຫຼື ເຫດການໃນຊີວິດປະຈຳວັນທີ່ເກີດຂຶ້ນໃນໄລຍະ ເວລາຕອນເຊົ້າ, ຕອນທ່ຽງ ແລະ ຕອນແລງ | |
| 2. ຊື່ວັນໃນອາທິດ,ຄຳທີ່ໃຊ້ບອກກ່ຽວກັບວັນ ແລະ ເດືອນໃນໜຶ່ງປີ | | 1. ລຽນລຳດັບຊື່ວັນໃນໜຶ່ງອາທິດ,<br>2. ບອກກິດຈະກຳ ຫຼື ເຫດການໃນໄລຍະເວລາໜຶ່ງອາທິດ | 1. ລຽນລຳດັບຊື່ວັນໃນໜຶ່ງອາທິດ ແລະຊື່ເດືອນໃນໜຶ່ງປີ<br>2. ບອກກິດຈະກຳ ຫຼື ເຫດການທີ່ເກີດຂຶ້ນມື້ນີ້,ມື້ວານ,ມື້ອື່ນ |

| ເນື້ອໃນທີ 3: ເລຂາຄະນິດ | | | |
|---|---|---|---|
| **1. ຮູ້ຈັກໃຊ້ຄຳໃນການບອກຕຳແໜ່ງ, ທິດທາງ ແລະ ໄລຍະທາງ**<br>- ການບອກຕຳແໜ່ງ<br>- ທິດທາງ<br>- ໄລຍະທາງຂອງສິ່ງຕ່າງໆ | ບອກຕຳແໜ່ງຂອງສິ່ງຕ່າງໆທີ່ກຳນົດໂດຍໃຊ້ຄຳວ່າ: ເທິງ, ລຸ່ມ, ໃນ, ນອກ | 1. ບອກຕຳແໜ່ງຂອງສິ່ງຕ່າງ ໆທີ່ກຳນົດໂດຍໃຊ້ຄຳວ່າ: ເທິງ, ລຸ່ມ, ໃນ, ນອກ<br>2. ບອກທິດທາງຂອງສິ່ງຕ່າງໆທີ່ກຳນົດໂດຍໃຊ້ຄຳວ່າ ໜ້າ, ຫຼັງ, ກາງ<br>3. ສະແດງສິ່ງຕ່າງໆຕາມຕຳແໜ່ງທີ່ກຳນົດ | 1. ບອກຕຳແໜ່ງ, ຂອງສິ່ງຕ່າງໆທີ່ກຳນົດໂດຍໃຊ້ຄຳວ່າ: ເທິງ, ໃນ, ລຸ່ມ ແລະ ນອກ<br>2. ບອກທິດທາງ ຂອງສິ່ງຕ່າງໆທີ່ກຳນົດໂດຍໃຊ້ຄຳວ່າ: ໜ້າ, ຫຼັງ, ກາງ, ເບື້ອງຊ້າຍ,ເບື້ອງຂວາ<br>3. ບອກໄລຍະທາງຂອງສິ່ງຕ່າງໆທີ່ກຳນົດໂດຍໃຊ້ຄຳວ່າ: ໃກ້,ໄກ<br>4. ສະແດງສິ່ງຕ່າງ ໆຕາມຕຳແໜ່ງ, ທິດທາງ ແລະ ໄລຍະທາງທີ່ກຳນົດ |

| | | | |
|---|---|---|---|
| **2. ຮູ້ຈັກຈຳແນກຮູບເລຂາຄະນິດ ແລະ ເຂົ້າໃຈການປ່ຽນແປງຮູບເລຂາຄະນິດທີ່ເກີດຈາກການຈັດຮູບແບບ**<br>2.1 ຮູບເລຂາຄະນິດສາມມິຕິປະກອບມີ: ທໍ່ກົມ, ກ້ອນສາກ, ກັບສາກ,ໜ່ວຍມົນ, ທາດຫຼ່ຽມ | ສະແດງສິ່ງຕ່າງໆໃນຊີວິດປະຈຳວັນທີ່ຄືກັນ ຫຼື ຄ້າຍຄືກັນ: ທໍ່ກົມ, ກ້ອນສາກ, ກັບສາກ,ໜ່ວຍມົນທີ່ກຳນົດໃຫ້ | 1. ສະແດງສິ່ງຕ່າງໆໃນຊີວິດປະຈຳວັນທີ່ຄືກັນ ຫຼື ຄ້າຍຄືກັນ: ທໍ່ກົມ, ກ້ອນສາກ, ກັບສາກ,ໜ່ວຍມົນ, ທາດຫຼ່ຽມທີ່ກຳນົດໃຫ້<br>2. ຈຳແນກຮູບຊົງ: ທໍ່ກົມ, ກ້ອນສາກ, ກັບສາກ, ໜ່ວຍມົນ | 1. ສະແດງສິ່ງຕ່າງໆໃນຊີວິດປະຈຳວັນທີ່ຄືກັນ ຫຼື ຄ້າຍຄືກັນ: ທໍ່ກົມ, ກ້ອນສາກ, ກັບສາກ,ໜ່ວຍມົນ, ທາດຫຼ່ຽມທີ່ກຳນົດໃຫ້<br>2. ຈຳແນກຮູບຊົງ: ທໍ່ກົມ, ກ້ອນສາກ, ກັບສາກ,ໜ່ວຍມົນ, ທາດຫຼ່ຽມ |
| 2. 2 ຮູບເລຂາຄະນິດ 2 ມິຕິປະກອບມີ: ຮູບວົງມົນ,ຮູບສາມແຈ,ຮູບຈະຕຸລັດ, ຮູບສີ່ແຈ | | | 1. ສະແດງສິ່ງຕ່າງໆໃນຊີວິດປະຈຳວັນທີ່ຄືກັນ ຫຼື ຄ້າຍຄືກັນ: ຮູບວົງມົນ, ຮູບສາມແຈ ແລະ ຮູບສີ່ແຈທີ່ກຳນົດໃຫ້<br>2. ຈຳແນກຮູບວົງມົນ, ຮູບສີ່ແຈສາກ, ຮູບຈະຕຸລັດ, ຮູບວົງມົນ |
| 2.3 ການປ່ຽນແປງຮູບເລຂາຄະນິດສອງມິຕິ. | | ບອກການປ່ຽນແປງທີ່ເກີດຂຶ້ນຈາກການພັບຮູບສີ່ແຈ, ຮູບສາມແຈ | ບອກການປ່ຽນແປງທີ່ເກີດຂຶ້ນຈາກການຕັດ, ຕິດ, ຕໍ່ເຕີມ, ພັບຮູບສາມແຈ,ຮູບສີ່ແຈ |
| 2.4 ການສ້າງສັນສິລະປະຈາກຮູບເລຂາ ຄະນິດສາມມິຕິ ແລະ ສອງມິຕິ | ສ້າງສັນສິລະປະຈາກທໍ່ກົມ, ກ້ອນສາກ ແລະ ໜ່ວຍມົນ | ສ້າງສັນສິລະປະຈາກທໍ່ກົມ, ກ້ອນສາກ, ໜ່ວຍມົນ, ທາດຫຼ່ຽມ | 1. ສ້າງສັນສິລະປະຈາກທໍ່ກົມ, ກ້ອນສາກ, ໜ່ວຍມົນ, ກັບສາກ,ທາດຫຼ່ຽມ.<br>2. ສ້າງສັນສິລະປະຈາກຮູບວົງມົນ, ສີ່ແຈ, ວົງມົນ, ສາມແຈ |

| ເນື້ອໃນທີ 4: ພຶດຊະຄະນິດ | | | |
|---|---|---|---|
| ເຂົ້າໃຈແບບຮູບທີ່ມີຮູບຮ່າງ, ຂະໜາດ, ສີທີ່ສຳພັນກັນຢ່າງໃດຢ່າງໜຶ່ງ | | 1. ວາງແບບຮູບໃຫ້ຄືກັນກັບແບບຮູບທີ່ກຳນົດຕາມສີ,ຮູບຮ່າງ, ຂະໜາດ<br>2. ວາງແບບຮູບໃຫ້ຄືກັນກັບແບບຮູບທີ່ກຳນົດຕາມສີ,ຂະໜາດ, ຮູບຊົງເລຂາຄະນິດ | 1. ຕໍ່ຮູບໃຫ້ເຂົ້າຊຸດກັບແບບຮູບທີ່ກຳນົດ<br>2. ສ້າງແບບຮູບຕາມຄວາມຄິດຂອງຕົນເອງ |

**ມາດຖານທີ 2 : ມີຄວາມສົນໃຈຮຽນຮູ້ສິ່ງຕ່າງໆ ແລະ ສະແຫວງຫາຄວາມຮູ້ທົ່ວໄປໄດ້ເໝາະສົມກັບໄວອາຍຸ**

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ 1 (3-4 ປີ) | ອະນຸບານ 2 (4-5 ປີ) | ອະນຸບານ 3 (5-6 ປີ) |
| 1. ຮຽນຮູ້ສິ່ງຕ່າງໆໂດຍຜ່ານປະສາດສຳຜັດທັງ 5 | ບອກລັກສະນະຄວາມຄືກັນ ແລະ ແຕກຕ່າງກັນຂອງສິ່ງຕ່າງໆດ້ວຍການເບິ່ງເຫັນ,ຟັງສຽງ, ຊີມລົດ,ດົມກິ່ນ, ຈັບບາຍ | ບອກລັກສະນະຄວາມຄືກັນ ແລະ ແຕກຕ່າງກັນຂອງສິ່ງຂອງດ້ວຍການເບິ່ງເຫັນ,ຟັງສຽງ, ຊີມລົດ, ດົມກິ່ນ, ຈັບບາຍ | ບອກລັກສະນະຄວາມຄືກັນ ແລະ ແຕກຕ່າງກັນຂອງສິ່ງຂອງດ້ວຍການເບິ່ງເຫັນ,ຟັງສຽງ, ຊີມລົດ, ດົມກິ່ນ, ຈັບບາຍ |
| 2. ຮຽນຮູ້ທຳມະຊາດ ແລະ ສິ່ງແວດລ້ອມ | ບອກຊື່ ແລະ ຄວາມສຳຄັນຂອງທຳມະຊາດ ແລະ ສິ່ງແວດລ້ອມທີ່ຢູ່ອ້ອມຮອບຕົວ | ບອກຊື່ ແລະ ຄວາມສຳຄັນຂອງທຳມະຊາດ ແລະ ສິ່ງແວດລ້ອມທີ່ຢູ່ອ້ອມຮອບຕົວ | ບອກຊື່ ແລະ ຄວາມສຳຄັນຂອງທຳມະຊາດ ແລະ ສິ່ງແວດລ້ອມທີ່ຢູ່ອ້ອມຮອບຕົວ |

| | | | |
|---|---|---|---|
| 3. ຮຽນຮູ້ສິ່ງຕ່າງໆພາຍໃນເຮືອນ, ໂຮງຮຽນ ແລະ ທ້ອງຖິ່ນ | 1. ບອກຊື່ ແລະ ຄວາມໝາຍຂອງວັນບຸນປະເພນີຂອງທ້ອງຖິ່ນ ແລະ ວັນສຳຄັນທາງປະຫວັດສາດ | 1. ບອກຊື່ ແລະ ຄວາມໝາຍຂອງວັນບຸນປະເພນີຂອງທ້ອງຖິ່ນ ແລະ ວັນສຳຄັນທາງປະຫວັດສາດ | 1. ບອກຊື່ ແລະ ຄວາມໝາຍຂອງວັນບຸນປະເພນີຂອງທ້ອງຖິ່ນ ແລະ ວັນສຳຄັນທາງປະຫວັດສາດ |
| | 2. ບອກຊື່ ແລະ ຄວາມສຳຄັນຂອງອາຊີບບຸກຄົນພາຍໃນຄອບຄົວຕົນເອງ ໂດຍມີຜູ້ຊ່ວຍແນະນຳ | 2. ບອກຊື່ ແລະ ຄວາມສຳຄັນຂອງອາຊີບບຸກຄົນພາຍໃນຄອບຄົວຕົນເອງ ໂດຍມີຜູ້ຊ່ວຍແນະນຳໃນບາງຄັ້ງ | 2. ບອກຊື່ ແລະ ຄວາມສຳຄັນຂອງອາຊີບບຸກຄົນພາຍໃນຄອບຄົວຕົນເອງໄດ້ຖືກຕ້ອງ |
| | 3. ສະແດງຄວາມເຄົາລົບຕໍ່ບຸກຄົນສຳຄັນໃນຄອບຄົວ ແລະ ທ້ອງຖິ່ນ ໂດຍມີຜູ້ຊ່ວຍແນະນຳ | 3. ສະແດງຄວາມເຄົາລົບຕໍ່ບຸກຄົນສຳຄັນໃນຄອບຄົວ ແລະ ທ້ອງຖິ່ນ ໂດຍມີຜູ້ຊ່ວຍແນະນຳໃນບາງຄັ້ງ | 3. ສະແດງຄວາມເຄົາລົບຕໍ່ບຸກຄົນສຳຄັນໃນຄອບຄົວ ແລະ ທ້ອງຖິ່ນດ້ວຍຕົນເອງ |
| | 4. ບອກຊື່ສະຖານທີ່ສຳຄັນໃນທ້ອງຖິ່ນທີ່ໂຮງຮຽນຕັ້ງຢູ່ໂດຍມີຜູ້ຊ່ວຍແນະນຳ | 4. ບອກຊື່ສະຖານທີ່ສຳຄັນໃນທ້ອງຖິ່ນທີ່ໂຮງຮຽນຕັ້ງຢູ່ໂດຍມີຜູ້ຊ່ວຍແນະນຳໃນບາງຄັ້ງ | 4. ບອກຊື່ສະຖານທີ່ສຳຄັນໃນທ້ອງຖິ່ນທີ່ໂຮງຮຽນຕັ້ງຢູ່ດ້ວຍຕົນເອງ |
| 4. ຮຽນຮູ້ການຄົມມະນາຄົມ ແລະ ການສື່ສານ | 1. ບອກວິທີການຮັກສາຄວາມປອດໄພໃນການເດີນທາງ ໂດຍມີຜູ້ຊ່ວຍແນະນຳ | 1. ບອກວິທີການຮັກສາຄວາມປອດໄພໃນການເດີນທາງ ໂດຍມີຜູ້ຊ່ວຍແນະນຳໃນບາງຄັ້ງ | 1. ບອກວິທີການຮັກສາຄວາມປອດໄພໃນການເດີນທາງໄດ້ດ້ວຍຕົນເອງ |
| | 2. ບອກການສື່ສານທາງໂທລະສັບ,ຈົດໝາຍ, ວິທະຍຸ, ໂທລະພາບ | 2. ບອກການສື່ສານທາງໂທລະສັບ,ຈົດໝາຍ,ວິທະຍຸ, ໂທລະພາບ | 2. ບອກການສື່ສານທາງໂທລະສັບ, ຈົດໝາຍ, ວິທະຍຸ, ໂທລະພາບ |
| 5.ສົນໃຈຮຽນຮູ້ສິ່ງຕ່າງໆທີ່ຢູ່ອ້ອມຮອບຕົວ | ເຂົ້າຮ່ວມກິດຈະກຳການຮຽນດ້ວຍຄວາມສົນໃຈຕັ້ງແຕ່ຕົ້ນຈົນຈົບ | ເຂົ້າຮ່ວມກິດຈະກຳການຮຽນດ້ວຍຄວາມສົນໃຈຕັ້ງແຕ່ຕົ້ນຈົນຈົບ | ເຂົ້າຮ່ວມກິດຈະກຳການຮຽນດ້ວຍຄວາມສົນໃຈຕັ້ງແຕ່ຕົ້ນຈົນຈົບ |
| 6.ສະແຫວງຫາຄຳຕອບດ້ວຍຫຼາຍວິທີ | 1.ຖາມຄຳຖາມ, ສະແດງຄວາມຄິດເຫັນກ່ຽວກັບເລື່ອງທີ່ສົນໃຈ | 1. ຖາມຄຳຖາມ,ສະແດງຄວາມຄິດເຫັນກ່ຽວກັບເລື່ອງທີ່ສົນໃຈ | 1. ຖາມຄຳຖາມ,ສະແດງຄວາມຄິດເຫັນກ່ຽວກັບເລື່ອງທີ່ສົນໃຈ |

| | | | |
|---|---|---|---|
| | 2. ຕອບຂໍ້ສົງໄສດ້ວຍວິທີການຕ່າງໆ | 2. ຕອບຂໍ້ສົງໄສດ້ວຍວິທີການຕ່າງໆ | 2. ຕອບຂໍ້ສົງໄສດ້ວຍວິທີການຕ່າງໆ |
| | 3. ເຊື່ອມໂຍງຄວາມຮູ້, ທັກສະຕ່າງໆທີ່ໄດ້ຮຽນຈາກຄູ ແລະ ໝູ່ເພື່ອນໄປໃຊ້ໃນຊີວິດປະຈຳວັນ | 3. ເຊື່ອມໂຍງຄວາມຮູ້, ທັກສະຕ່າງໆທີ່ໄດ້ຮຽນຈາກຄູ ແລະ ໝູ່ເພື່ອນໄປໃຊ້ໃນຊີວິດປະຈຳວັນ | 3. ເຊື່ອມໂຍງຄວາມຮູ້, ທັກສະຕ່າງໆທີ່ໄດ້ຮຽນຈາກຄູແລະ ໝູ່ເພື່ອນໄປໃຊ້ໃນຊີວິດປະຈຳວັນ |

## V. ພັດທະນາການທາງດ້ານພາສາ

**ມາດຖານທີ 1:** ຟັງ, ເບິ່ງ, ເວົ້າສື່ສານໃນຊີວິດປະຈຳວັນໄດ້ເໝາະສົມກັບໄວອາຍຸ

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ 1 (3-4 ປີ) | ອະນຸບານ 2 (4-5 ປີ) | ອະນຸບານ 3 (5-6 ປີ) |
| 1. ຟັງ ແລະ ປະຕິບັດຕາມຄຳສັ່ງ | ຟັງ ແລະ ປະຕິບັດຕາມຄຳສັ່ງງ່າຍ ໆ ຢ່າງນ້ອຍ 1 ຄຳສັ່ງ | ຟັງ ແລະ ປະຕິບັດຕາມຄຳສັ່ງທີ່ຕໍ່ເນື່ອງຢ່າງນ້ອຍ 2 ຄຳສັ່ງ | ຟັງ ແລະ ນຳເລື່ອງທີ່ໄດ້ຟັງມາເລົ່າຕໍ່ໄດ້ |
| 2. ຈື່ຈຳສິ່ງທີ່ໄດ້ຟັງ, ເບິ່ງ ແລະ ເລົ່າເລື່ອງໃຫ້ຜູ້ອື່ນເຂົ້າໃຈ | ເວົ້າເປັນຄຳງ່າຍໆຈາກການຟັງຄຳຄ່ອງ, ນິທານ,ເພງ ແລະ ເບິ່ງການສະແດງ | ເວົ້າເປັນປະໂຫຍກສັ້ນໆຈາກການຟັງຄຳຄ່ອງ, ນິທານ,ເພງ ແລະ ເບິ່ງການສະແດງ | ເວົ້າເປັນວັກເປັນຕອນຈາກການຟັງຄຳຄ່ອງ, ນິທານ, ເພງ ແລະ ເບິ່ງການສະແດງ |
| 3. ເວົ້າສື່ສານໃນຊີວິດປະຈຳວັນກັບຜູ້ອື່ນ | ນຳໃຊ້ຄຳສັບໃໝ່ໃນຊີວິດປະຈຳວັນໄດ້ 100 ຄຳຂຶ້ນໄປ | ນຳໃຊ້ຄຳສັບໃໝ່ໃນຊີວິດປະຈຳວັນໄດ້ 200 ຄຳຂຶ້ນໄປ | ນຳໃຊ້ຄຳສັບໃໝ່ໃນຊີວິດປະຈຳວັນໄດ້ 300 ຄຳຂຶ້ນໄປ |
| 4. ສົນທະນາຕອບຄຳຖາມຈາກÀເື່ອງທີ່ໄດ້ຟັງ ແລະ ເບິ່ງ | ສົນທະນາ, ຕອບຄຳຖາມຈາກເລື່ອງທີ່ໄດ້ຟັງ ແລະ ເບິ່ງເປັນຄຳເວົ້າສັ້ນໆ | ສົນທະນາ, ຕອບຄຳຖາມຈາກເລື່ອງທີ່ໄດ້ຟັງ ແລະ ເບິ່ງເປັນຄຳເວົ້າທີ່ເປັນປະໂຫຍກ | ສົນທະນາ, ຕອບຄຳຖາມຈາກເລື່ອງທີ່ໄດ້ຟັງ ແລະ ເບິ່ງເປັນຄຳເວົ້າທີ່ເປັນປະໂຫຍກຖືກຕ້ອງ ແລະ ແຈ່ມແຈ້ງ |
| 5. ມີມາລະຍາດໃນການຟັງ, ເບິ່ງ ແລະ ເວົ້າ | ສະແດງມາລະຍາດໃນການຟັງ, ເບິ່ງ, ເວົ້າໄດ້ເໝາະສົມກັບໄວອາຍຸໂອກາດ ແລະ ສະຖານທີ່ | ສະແດງມາລະຍາດໃນການຟັງ, ເບິ່ງ, ເວົ້າໄດ້ເໝາະສົມກັບໄວອາຍຸໂອກາດ ແລະ ສະຖານທີ່ | ສະແດງມາລະຍາດໃນການຟັງ, ເບິ່ງ, ເວົ້າໄດ້ເໝາະສົມກັບໄວອາຍຸໂອກາດ ແລະ ສະຖານທີ່ |

ມາດຖານທີ 2:  ອ່ານປຶ້ມ ແລະ ສ້າງຄວາມຮູ້, ທັກສະໃນການອ່ານ ແລະ ສ້າງນິດໄສຮັກການອ່ານໄດ້ເໝາະສົມກັບໄວອາຍຸ

| **ເນື້ອໃນ** | **ຕົວຊີ້ບອກ** | | |
|---|---|---|---|
| | ອະນຸບານ 1  (3-4 ປີ) | ອະນຸບານ 2 (4-5 ປີ) | ອະນຸບານ 3 (5-6 ປີ) |
| 1. ມີຄວາມສົນໃຈອ່ານປຶ້ມ | ສົນໃຈເລື່ອງທີ່ຜູ້ອື່ນອ່ານໃຫ້ຟັງ | ເບິ່ງຮູບພາບຕາມປຶ້ມພ້ອມທັງອ່ານຫຼື ເວົ້າຕາມຮູບພາບ | ເບິ່ງຮູບພາບຕາມປຶ້ມພ້ອມທັງອ່ານ ຫຼື ເວົ້າເປັນເລື່ອງໄປພ້ອມ |
| 2. ສັງເກດພະຍັນຊະນະ, ສະຫຼະທີ່ຄືກັນ, ການວາງວັນນະ ຍຸດ ແລະ ຕົວສະກົດ | 1. ບອກຄວາມຄືກັນ ແລະ ແຕກຕ່າງກັນຂອງພະຍັນຊະນະ | 1. ຈຳແນກຄວາມຄືກັນ,ແຕກຕ່າງກັນຂອງພະຍັນຊະນະ ແລະ ສະຫຼະ | 1. ຈັດວາງຕຳແໜ່ງວັນນະຍຸດແລະ ຕົວສະກົດ |
| | 2. ບອກຕົວພະຍັນຊະນະທີ່ເອົາອອກ ແລະ ຕື່ມເຂົ້າ | 2. ບອກຕົວພະຍັນຊະນະ ແລະ ສະຫຼະທີ່ເອົາອອກ ແລະ ຕື່ມເຂົ້າ | 2. ບອກການວາງຕຳແໜ່ງວັນນະຍຸດ ແລະ ຕົວສະກົດທີ່ເອົາອອກ ແລະ ຕື່ມເຂົ້າ |
| 3. ອ່ານອອກສຽງພະຍັນຊະນະ, ສະຫຼະ, ວັນນະຍຸດ ແລະ ຄຳທີ່ມີຕົວສະກົດ | ອ່ານອອກສຽງພະຍັນຊະນະຕາມຮູບພາບ | 1. ອ່ານອອກສຽງພະຍັນຊະນະເຄົ້າ ແລະ ສະຫຼະຕາມຮູບພາບ | 1. ອ່ານອອກສຽງເປັນຄຳເວົ້າຕາມຮູບພາບ |
| | | 2. ອ່ານອອກສຽງ (ຜັນສຽງ) ຄຳທີ່ບໍ່ມີວັນນະຍຸດ ແລະ ມີວັນນະຍຸດ 2 ຕົວ (X່ X້) | 2. ອ່ານອອກສຽງ (ຜັນສຽງ) ຄຳທີ່ມີວັນນະຍຸດ 2 ຕົວ (x່ x້) ແລະ ຕົວສະກົດ (ກ,ນ,ງ,ດ,ຍ,ມ,ຍ,ວ) |
| 4. ມີມາລະຍາດໃນການອ່ານ | ສະແດງມາລະຍາດໃນການອ່ານໄດ້ເໝາະສົມກັບເວລາ ແລະ ໂອກາດ | ສະແດງມາລະຍາດໃນການອ່ານໄດ້ເໝາະສົມກັບເວລາ ແລະ ໂອກາດ | ສະແດງມາລະຍາດໃນການອ່ານໄດ້ເໝາະສົມກັບເວລາ ແລະ ໂອກາດ |

ມາດຖານທີ 3: ຂຽນຕົວອັກສອນລາວ ແລະ ສ້າງຄວາມຮູ້, ທັກສະໃນການຂຽນ, ສ້າງນິດໄສຮັກການຂຽນໄດ້ເໝາະສົມກັບໄວອາຍຸ

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ 1 (3-4 ປີ) | ອະນຸບານ 2 (4-5 ປີ) | ອະນຸບານ 3 (5-6 ປີ) |
| 1. ສະແດງທັກສະການຂຽນຂັ້ນພື້ນຖານ | 1. ສະແດງລີລາມື ໂດຍການຂີດເສັ້ນຊື່, ເສັ້ນກົ່ງ, ເສັ້ນເນີ້ງ, ເສັ້ນວົງມົນ | 1. ຂີດເສັ້ນຕໍ່ຈຸດເປັນຮູບພາບ | 1. ຂີດ ຫຼື ແຕ້ມເປັນຮູບພາບ |
| | 2. ສັງເກດຮູບຮ່າງຕົວອັກສອນ ແລະ ຂຽນພະຍັນຊະນະບາງຕົວຕາມຮອຍຈໍ້ | 2. ສັງເກດຮູບຮ່າງຕົວອັກສອນຂຽນພະຍັນຊະນະ, ສະຫຼະເຄົ້າບາງຕົວຕາມຮອຍຈໍ້ | 2. ສັງເກດຮູບຮ່າງຕົວອັກສອນ ແລະຂຽນເປັນຄຳສັບງ່າຍໆຕາມຮອຍຈໍ້ |
| 2. ມີມາລະຍາດໃນການຂຽນ | ຂຽນໃຫ້ອ່ານງ່າຍ, ສະອາດຈົບງາມຖືກຕາມຫຼັກການຂຽນພາສາລາວ | ຂຽນໃຫ້ອ່ານງ່າຍ, ສະອາດຈົບງາມຖືກຕາມຫຼັກການຂຽນພາສາລາວ | ຂຽນໃຫ້ອ່ານງ່າຍ, ສະອາດຈົບງາມຖືກຕາມຫຼັກການຂຽນພາສາລາວ |

**ໝາຍເຫດ: ສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານພາສາອັງກິດ**

ໃນໄລຍະຜ່ານມາເຖິງວ່າຫຼັກສູດອະນຸບານສຶກສາຂອງກະຊວງສຶກສາທິການ ແລະ ກິລາຈະບໍ່ໄດ້ກຳນົດການກຽມຄວາມພ້ອມທາງດ້ານພາສາຕ່າງປະເທດໄວ້ກໍຕາມ,ແຕ່ກໍມີໂຮງຮຽນອະນຸບານຈຳນວນບໍ່ໜ້ອຍໄດ້ກຽມຄວາມພ້ອມທາງດ້ານພາສາອັງກິດໃຫ້ແກ່ນັກຮຽນຂອງຕົນເອງໂດຍສະເພາະແມ່ນນັກຮຽນອະນຸບານເອກະຊົນສະນັ້ນ, ເພື່ອເປັນທິດທາງໃຫ້ໂຮງຮຽນດັ່ງກ່າວ (ແຕ່ບໍ່ບັງຄັບ), ຄະນະພັດທະນາຫຼັກສູດຊັ້ນອະນຸບານສະບັບນີ້ຈຶ່ງສະເໜີສະມັດຖະພາບການກຽມຄວາມພ້ອມດ້ານພາສາອັງກິດໄວ້ດັ່ງນີ້:

## ສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານພາສາອັງກິດ

### ມາດຖານທີ 1: ອ່ານຕົວອັກສອນພາສາອັງກິດຕາມປຶ້ມເພື່ອສ້າງຄວາມຮູ້, ທັກສະໃນການອ່ານ ແລະ ສ້າງນິໄສຮັກການອ່ານໄດ້ເໝາະສົມກັບໄວອາຍຸ

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ 1 (3-4 ປີ) | ອະນຸບານ 2 (4-5 ປີ) | ອະນຸບານ 3 (5-6 ປີ) |
| 1. ມີຄວາມສົນໃຈອ່ານຕົວອັກສອນ A ເຖິງ Z | ເລີ່ມສົນໃຈຕົວອັກສອນທີ່ຜູ້ອື່ນອ່ານໃຫ້ຟັງ | ເບິ່ງປຶ້ມ ແລະ ທຳທ່າອ່ານ ຕົວອັກສອນ A ເຖິງ Z | ເບິ່ງຮູບພາບຕາມປຶ້ມພ້ອມທັງອ່ານຕົວອັກສອນA ເຖິງ Z |
| 2. ສັງເກດຕົວອັກສອນ A ເຖິງ Z | 1. ຈຳແນກຄວາມຄືກັນ ແລະ ແຕກຕ່າງກັນຂອງຕົວອັກສອນ A ເຖິງ Z | 1. ຈຳແນກຄວາມຄືກັນ ແລະ ແຕກຕ່າງກັນຂອງ ຕົວອັກສອນ A ເຖິງ Z ຕົວໜັງສືນ້ອຍ ແລະ ໃຫຍ່ | 1. ຈຳແນກຄວາມຄືກັນ ແລະ ແຕກຕ່າງກັນຂອງ ຕົວອັກສອນ A ເຖິງ Z ຕົວໜັງສືນ້ອຍ ແລະ ໃຫຍ່ |
| | | 2. ອ່ານລຽນລຳດັບຕົວອັກສອນຕາມລຳດັບ A ເຖິງ Z | 2. ບອກຕົວອັກສອນທີ່ເອົາອອກ ແລະ ເພີ່ມເຂົ້າ A ເຖິງ Z |
| 3. ອ່ານອອກສຽງຕົວອັກສອນ A ເຖິງ Z ຕາມຮູບພາບ | ອ່ານອອກສຽງຕົວອັກສອນຕາມຮູບພາບ A ເຖິງ Z | ຮູ້ຄວາມໝາຍ ແລະ ອ່ານອອກສຽງຕົວອັກສອນຕາມຮູບພາບ A ເຖິງ Z | ຮູ້ຄວາມໝາຍ ແລະ ອ່ານອອກສຽງເປັນຄຳເວົ້າຕາມຮູບພາບ A ເຖິງ Z |
| 4. ນັບຈຳນວນ | ນັບຈຳນວນ one-ten | ນັບຈຳນວນ one-ten ຕາມລຳດັບ | ນັບຈຳນວນ one-ten ຕາມຕົວເລກທີ່ພົບເຫັນໄດ້ຖືກຕ້ອງ |

ມາດຖານທີ 2: ຂຽນຕົວອັກສອນພາສາອັງກິດເພື່ອສ້າງຄວາມຮູ້ໃນການຂຽນ ແລະ ສ້າງນິດໄສຮັກການຂຽນໄດ້ເໝາະສົມກັບໄວອາຍຸ

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ 1 (3-4 ປີ) | ອະນຸບານ 2 (4-5 ປີ) | ອະນຸບານ 3 (5-6 ປີ) |
| 1. ສະແດງທັກສະການຂຽນພາສາອັງກິດຂັ້ນພື້ນຖານ | 1. ເຝິກແອບກ້າມຊີ້ນມືໂດຍການຂີດເສັ້ນຊື່, ເສັ້ນກົງ, ເສັ້ນເນັ້ງ | 1. ຂີດເສັ້ນຕໍ່ຈຸດເປັນຮູບພາບ | 1. ຂີດ ຫຼື ແຕ້ມເປັນຮູບພາບ |
| | 2. ເລີ່ມເຝິກແອບຂຽນຕາມຮອຍຈ້ຳ ຕົວອັກສອນ A ເຖິງ Z ຕົວອັກສອນໃຫຍ່ | 2. ຂຽນຕາມຮອຍຈ້ຳຕົວອັກສອນ A ເຖິງ Z ຕົວອັກສອນໃຫຍ່ ແລະ ນ້ອຍ a ເຖິງ z | 2. ຂຽນຕົວອັກສອນ A ເຖິງ Z ຕົວອັກສອນໃຫຍ່ ແລະນ້ອຍ a ເຖິງ z |
| | 3. ຂຽນຕາມຮອຍຈ້ຳຕົວເລກອາຣັບ 1-9 | 3. ຂຽນຕົວເລກອາຣັບ 1-9 | 3. ຂຽນຕົວເລກອາຣັບ 1-9 ແລະ ຈຳ ນວນ one-ten |

## ອະທິບາຍສັບ

1. ເຈຕະຄະຕິ: ທ່າທີ ຫຼື ຄວາມຮູ້ສຶກຂອງບຸກຄົນຕໍ່ສິ່ງໃດ ສິ່ງໜຶ່ງ.
2. ຄວາມສຳພັນ: ພົວພັນ, ຜູກພັນ, ກ່ຽວຂ້ອງ.
3. ສຳຜັດ: ການແຕະຕ້ອງລູບຄຳ, ຕາເຫັນຮູບ, ຫູໄດ້ຍິນສຽງ, ດັງດົມກິ່ນ, ລີ້ນໄດ້ຊີມລົດຊາດ.
4. ກະຕືລືລົ້ນ: ຢາກເຮັດຢາກທຳ, ຫ້າວຫັນວ່ອງໄວ, ຂົ້ນໃຈຢາກເຮັດ.
5. ທັດສະນະຄະຕິ: ແນວຄວາມຄິດເຫັນ.
6. ຈິນຕະນາການ: ອາການຄິດ, ຄວາມຄິດ, ແນວຄິດ.
7. ພັດທະນາການ: ການທຳຄວາມຈະເລີນ, ການປ່ຽນແປງໃນທາງກ້າວໜ້າ, ການພັດທະນາໃນທາງຈະເລີນຂຶ້ນ.
8. ກິດຈະກຳສິລະປະສ້າງສັນ ຫຼື ກິດຈະກຳກ່ຽວກັບສິລະປະສຶກສາເຊັ່ນ: ການແຕ້ມ, ທາສີ, ການປັ້ນ, ການພິມ, ການພັບ, ການຈີກ, ຕິດ, ພັບ, ຂີດ, ຂຽນພະຍັນຊະນະ, ຕົວເລກຕາມຮອຍຈ້ຳທີ່ສິ່ງເສີມ.
9. ກິດຈະກຳວົງມົນ: ກິດຈະກຳທີ່ຈັດໃຫ້ເດັກໄດ້ຟັງ, ເວົ້າ, ສັງເກດ, ຄິດ ແລະ ປະຕິບັດການທົດລອງ ເພື່ອໃຫ້ເກີດຄວາມຄິດລວມຍອດ ແລະ ເພີ່ມທັກສະຕ່າງໆ.
10. ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ກິດຈະກຳເຄື່ອນໄຫວທີ່ຮ່າງກາຍ ແລະ ຈິດໃຈມີປະຕິກິລິຍາຕອບສະໜອງຕໍ່ຈັງຫວະ ແລະ ສຽງດົນຕີ.
11. ກິດຈະກຳຫຼິ້ນຕາມມຸມ: ກິດຈະກຳທີ່ຈັດໃຫ້ເດັກໄດ້ຫຼິ້ນກັບສື່ສິ່ງພິມ, ອຸປະກອນ ແລະ ເຄື່ອງຫຼິ້ນຕາມໃຈໃນມຸມການຫຼິ້ນ, ເດັກໄດ້ຮຽນຮູ້ປະສົບການຊີວິດຈາກການຫຼິ້ນຕາມມຸມ, ເດັກໄດ້ພັດທະນາຄວາມຄິດສ້າງສັນ ໄດ້ມ່ວນຊື່ນກັບການຫຼິ້ນທີ່ຕອບສະໜອງຄວາມຕ້ອງການຕາມທຳມະຊາດຂອງເດັກ.
12. ກິດຈະກຳການຫຼິ້ນກາງແຈ້ງ: ແຈ້ງ: ກິດຈະກຳທີ່ຈັດໃຫ້ເດັກໄດ້ມີໂອກາດເຄື່ອນໄຫວຮ່າງກາຍ ແລະ ປະກອບກິດຈະກຳການຫຼິ້ນຕ່າງໆ ໃນບ່ອນທີ່ໂລ່ງແຈ້ງ ເຊັ່ນ: ໃນເດີ່ນຫຼິ້ນ ຫຼື ຕາມຮົ່ມໄມ້ ຫຼື ໃນຫ້ອງຮຽນ.
13. ກິດຈະກຳເກມການສຶກສາ: ກິດຈະກຳການຫຼິ້ນທີ່ພັດທະນາຜູ້ຮຽນໃນການຄົ້ນຄິດຜ່ານຮູບແບບຂອງເກມຕ່າງໆ ເຊັ່ນ: ເກມຈັບຄູ່, ກຽມລຽນລຳດັບ, ຕໍ່ຮູບພາບ: ລອດໂຕ, ໂດມິໂນ.
14. ສະມັດຖະພາບການກຽມຄວາມພ້ອມດ້ານການຮຽນ: ຄວາມສາມາດໃນການກຽມຄວາມພ້ອມດ້ານການຮຽນ ຂຽນຫຍໍ້ວ່າ ສ.ພ.ກ.

ພິມທີ່ວິສາຫະກິດໂຮງພິມສຶກສາ
ພິມເພື່ອ
2012